# 11. ປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ

## ຂໍ້ມູນທົ່ວໄປ

### ຊື່: ນາກາຍ ນ້ຳເທີນ

**ເນື້ອທີ່**

353,200 ຮຕ (ໃນດຳລັດ164/ນຍ)
73,860 ຮຕ (ເຂດເຊື່ອມຕໍ່ທາງທິດເໜືອ)
3,310 ຮຕ (ເຂດເຊື່ອມຕໍ່ທາງທິດໃຕ້)
10,728 ຮຕ(ເຂດອະນຸລັກຊະນິດພັນ)

439,498 ຮຕ (ເນື້ອທີ່ທັງໝົດ)

**ວັນ,ເດືອນ,ປີ ທີ່ໄດ້ຖືກກຳນົດເປັນປ່າສະຫງວນ**

29 ຕຸລາ 1993 ພາຍໃຕ້ດຳລັດເລກທີ 164/ນຍ.

**ຈຸດທີ່ຕັ້ງ:** ເສັ້ນຂະໜານ: 17$^{o}$ 36' - 18$^{o}$ 23' ເໜືອ; ເສັ້ນແວງ: 101$^{o}$ 04' - 101$^{o}$ 32' ຕາເວັນອອກ

**ແຂວງ**

ບໍລິຄຳໄຊ
ຄຳມ່ວນ

**ເມືອງ**

| | | |
|---|---|---|
| ຄຳເກີດ | 38,752 ຮຕ ກວມເອົາ 11 % | [ບໍລິຄຳໄຊ] |
| ບົວລະພາ | 3,272 ຮຕ ກວມເອົາ 1 % | [ຄຳມ່ວນ] |
| ຍົມມະລາດ | 13,879 ຮຕ ກວມເອົາ 4 % | [ຄຳມ່ວນ] |
| ນາກາຍ | 292,382 ຮຕ ກວມເອົາ 84 % | [ຄຳມ່ວນ] |

| | | |
|---|---|---|
| ແລວເຊື່ອມຕໍ່ ນາກາຍ ນ້ຳເທີນ - ພູຫີນປູນ | ເມືອງຄຳເກີດ ແລະ ນາກາຍ | 44,582 ຮຕ |
| ແລວເຊື່ອມຕໍ່ນາກາຍນ້ຳເທີນ -ຫີນໜາມໜໍ່ | ເມືອງບົວລະພາ | 3,310 ຮຕ |

**ຂອບເຂດຊາຍແດນ**

ຈຸດດ້ານເໜືອສຸດຂອງປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ ແມ່ນຢູ່ດ່ານສາກົນນ້ຳພາວ, ເມືອງ ຄຳເກີດ. ຈາກບ່ອນນັ້ນ, ເສັ້ນແດນຂອງປ່າສະຫງວນແມ່ນລຽບໄປຕາມ ຊາຍແດນລະຫວ່າງປະເທດຢູ່ດ້ານຕາເວັນອອກສ່ຽງໃຕ້ ລ່ວງຍາວ 161 ກມ

ຈົນໄປຮອດ ດ່ານສາກົນ ຈໍລໍ່ ຢູ່ເສັ້ນທາງ ໝູ່ເກັຍ ຕັ້ງຢູ່ເມືອງບົວລະພາ. ຈາກດ່ານສາກົນຈໍລໍ່ ເສັ້ນແດນເໜັ່ງໄປຕາມຕີນພູອາກ ຂະໜານກັບດ້ານເໜືອຂອງທາງເລກ 12 ໄປຕະຫລອດເມືອງບົວລະພາ ແລະ ເມືອງ ຍົມມະລາດ. ກາຍຈຸດບ້ານດອນໄປ, ເສັ້ນແດນຈະເໜັ່ງໄປທາງຕາເວັນອອກສ່ຽງເໜືອ ຈົນໄປຮອດດ້ານຕາເວັນອອກ ຂອງອ່າງເກັບນໍ້າ - ນ້ຳເທີນ. ແລ້ວເລາະໄປຕາມພູພຽງນາກາຍ ຮອດດ້ານຕາເວັນອອກສ່ຽງເໜືອ ຂອງອ່າງນໍ້າເທີນ. ຂອບເຂດຊາຍແດນດ້ານທິດຕາ ເວັນຕົກແມ່ນເລາະໄປຕາມຕີນ "ພູແບ່ງເຂດ" ຊຶ່ງເປັນບ່ອນທີ່ເສັ້ນແດນສືບຕໍ່ເໜັ່ງໄປທາງ ທິດຕາເວັນອອກສ່ຽງເໜືອ ແລ້ວໄປຕາມເຂດນໍ້າເທີນເກົ່າ ຈົນຮອດນໍ້າໂຊດ. ຈາກຈຸດນັ້ນ, ຂອບເຂດຊາຍແດນບັນຈົບກັບ ເສັ້ນທາງເລກທີ 8B ຊຶ່ງກາຍໄປຈົນຮອດຊ່ອງທາງແຄບໆ ຕໍ່ໄປໃສ່ ພູພຽງນາກາຍ, ເວົ້ງໄປຕາມບໍລິເວນຮ່ອມພູທີ່ມີປະຊາຊົນອາໄສຢູ່ (ນໍ້າແວວ ແລະ ນໍ້າກະຕະ). ຈາກນັ້ນແມ່ນເລາະໄປທາງດ້ານທິດໃຕ້ຂອງທາງເລກ 8A ເບື້ອງທິດຕາເວັນອອກສ່ຽງເໜືອ ຕາມຕີນພູຫລວງ ຮອດດ່ານຊາຍແດນສາກົນ ລາວ-ຫວຽດນາມ.

ການສ້າງຕັ້ງເຂດແລວເຊື່ອມຕໍ່ນໍ້າເທີນ ເຊື່ອມຈອດກັບ ເຂດປ່າສະຫງວນພູຫີນປູນແຂວງຄໍາມ່ວນ ຈະເປັນເຂດແດນທຽວໄປມາທີ່ກວ້າງໃຫຍ່ ແລະ ເປັນຖິ່ນທີ່ຢູ່ອາໄສ ຂອງຊະນິດພັນສະເພາະຖິ່ນ ທີ່ມີຢູ່ໃນເຂດປ່າະສະຫງວນແຫ່ງຊາດ ນາກາຍນໍ້າເທີນ ຊຶ່ງບໍ່ມີບັນທຶກວ່າມີຢູ່ບ່ອນອື່ນໆ, ພ້ອມທັງ ເປັນບ່ອນທາງທຽວປົກກະຕິຂອງຊ້າງທີ່ມາຈາກເຂດພູພຽງນາກາຍ (ອີງການອະນຸລັກສັດປ່າ WCS 1996). ເຂດເຊື່ອມຕໍ່ທາງໃຕ້ ຊຶ່ງເປັນເຂດພື້ນທີ່ຂະໜາດນ້ອຍ ທີ່ເປັນບ່ອນເຊື່ອມໂຍງທີ່ສໍາຄັນໄປສູ່ເຂດປ່າສະຫງວນຫີນໜາມໜໍ່ ທີ່ມີພື້ນທີ່ຂະໜາດໃຫຍ່ ຊຶ່ງຕິດຈອດກັບ ເຂດອະນຸລັກທໍາມະຊາດ ຟອງຍາ - ເກບັງ ຢູ່ປະເທດຫວຽດນາມ.

**ການເຂົ້າເຖິງ**

ມີພຽງເສັ້ນທາງຫລັກແຫ່ງດຽວເທົ່ານັ້ນ ທີ່ເຂົ້າໄປຮອດຈຸດໃຈກາງ ຂອງເຂດປ່າສະຫງວນ, ຊຶ່ງກໍແມ່ນເສັ້ນທາງທີ່ເຂົ້າເຖິງເຂດປ່າສະຫງວນແຫ່ງຊາດໄດ້ ຈາກເບື້ອງທາງຫລວງໝາຍເລກ 8B (ບໍລິເວນບ້ານແກ້ງແດງ,ເມືອງຄໍາເກີດ) ຫາ ບ້ານທ່າມ່ວງ (ບ່ອນສາຍນໍ້າໂຊດ) ຫາບ້ານ ນາວາງ (ບ່ອນບ້ານນໍ້າມອນ). ແນວໃດກໍຕາມ, ທາງເສັ້ນນີ້ ບໍ່ໄດ້ມີການສ້ອມແປງ ແລະບໍ່ໄດ້ຖືກນໍາໃຊ້ມາຕັ້ງແຕ່ປີ 1998. ຄວາມຈິງແລ້ວ ທາງເສັ້ນນີ້ຍັງຖືກໃຊ້ເປັນເສັ້ນທາງລົດແກ່ໄມ້ທ່ອນ ໃນຊ່ວງລະດູແລ້ງຊຶ່ງສາມາດຂຶ້ນໄປຮອດພູຊອງໄດ້ ແລະ ໄຕ່ໄປຕາມສັນພູຊອງ ດ້ານທິດຕາເວັນອອກ ໃນໄລຍະທາງຫລາຍກວ່າ 10 ກມ; ແນວໃດກໍຕາມ ມັນບໍ່ເຄີຍຖືກນໍາໃຊ້ເຂົ້າໃນການຂົນໄມ້ທ່ອນຈັກເທື່ອເລີຍ. ສໍາລັບເຂດພູພຽງນາກາຍແມ່ນສາມາດເຂົ້າເຖິງໄດ້ ໂດຍນໍາໃຊ້ເສັ້ນທາງເລກ 12 ຈາກທ່າແຂກ ແລະ ເສັ້ນທາງ ເລກ 8B ໄປຮອດເມືອງນາກາຍ ແລະເຂດພູພຽງນາກາຍ. ໃນລະດູຝົນ ສ່ວນໜຶ່ງຂອງທາງເສັ້ນນີ້ ນັບແຕ່ເມືອງຍົມມະລາດ ຫາ ນາກາຍ (ໂດຍຂຶ້ນຜ່ານສັນພູອາກ), ແລະເສັ້ນທາງເລກທີ 8B ສ່ວນທີ່ຢູ່ໃນເຂດພູພຽງນາກາຍໃນລະດູຝົນ ແມ່ນມີຄວາມຫຍຸ້ງຍາກຫລາຍ. ເສັ້ນທາງຂຸດຄົ້ນໄມ້ໃນລະດູແລ້ງຫລາຍເສັ້ນ ແມ່ນເຂົ້າໃນເຂດປ່າສະຫງວນແຫ່ງຊາດ ລຽບຕາມຂອບອ່າງເກັບນໍ້າ - ນ້ຳເທີນ 2 (ມີຄວາມສູງ 538 ມ) ຢູ່ດ້ານຕາເວັນອອກ ຂອງພູພຽງນາກາຍ. ເບື້ອງທິດຕາເວັນຕົກຂອງເຂດປ່າສະຫງວນແຫ່ງຊາດ ເກືອບຕິດຈອດທັງໝົດ ກັບເສັ້ນທາງເລກ 8A ແລະ B ແລະ ເສັ້ນທາງເລກ 12.

**ແຜນທີ່**

ມາດຕາສ່ວນ 1: 50,000

| | | |
|---|---|---|
| 6045-4 | 6045-1 | |
| 6045-3 | 6045-2 | 6145-3 |
| 6044-4 | 6044-1 | 6144-4 |

| | | | |
|---|---|---|---|
| 6044-3 | 6044-2 | 6144-3 | 6144-2 |

ມາດຕາສ່ວນ l: 100,000 (ເສັ້ນທີ່ເປັນຮອຍຈ້ຳເມັດ ແມ່ນພື້ນທີ່ສະເໜີຂະຫຍາຍອອກຕື່ມ)

| | | | |
|---|---|---|---|
| E-48-42 | E-48-43 | | |
| E-48-54 | E-48-55 | | |
| E-48-66 | E-48-67 | E-48-68 | |
| E-48-78 | E-48-79 | E-48-80 | |
| E-48-90 | E-48-91 | E-48-92 | E-48-93 |

## ຄວາມເປັນມາໂດຍຫຍໍ້

| | |
|---|---|
| ໃນຊ່ວງຕົ້ນຊຸມ ປີ **1700S** | ປະຊາຊົນຊາວເຊັກ ໄດ້ຍ້າຍເຂົ້າມາຢູ່ເຂດນ້ຳແພວ (ນ້ຳນ້ອຍ) ແທນຊາວຫວຽດຕິກ (ກຣີ-ຟອງ) ທີ່ໄດ້ອາໄສຢູ່ບ່ອນນີ້ມາກ່ອນ. |
| **1828-1860** | ໄທ ໄດ້ເຂົ້າມາບຽດຍຶດເອົາເຂດພູພຽງນາກາຍ ແລະ ພື້ນທີ່ໃກ້ຄຽງ. ປະຊາຊົນຊາວເຊັກໄດ້ຖອຍກັບຄືນໄປຢູ່ປະເທດຫວຽດນາມ ແລະ ຊາວເຊັກຢູ່ເຂດນາກະໂດກ (ເມືອງ ຄຳເກີດ) ໄດ້ຍົກຍ້າຍເຂົ້າມາລີ້ໄພຢູ່ເຂດບ້ານນາວາງ (ເມືອງ ນາກາຍ), ຊຶ່ງພື້ນທີ່ນາຂັ້ນໄດ ຂອງພວກເຂົາ ຍັງປະກົດໃຫ້ເຫັນຈົນຮອດປະຈຸບັນ (ປະຈຸບັນ ແມ່ນຊົນເຜົ່າບຣູ ນຳໃຊ້ປູກພືດ). |
| **1860-1900** | ຢູ່ໃນຊ່ວງໄລຍະນີ້ ຊາວໄທ ໄດ້ຍົກຍ້າຍໜີອອກຈາກພື້ນທີ່ ແລະ ປະຊາຊົນຜູ້ທີ່ປາກພາສາກຣີ ໄດ້ເຂົ້າມາອາໄສຢູ່ເຂດອ່າງນ້ຳນ້ອຍ. ຊົນເຜົ່າບຣູ ໄດ້ຍ້າຍເຂົ້າມາຢູ່ບ່ອນທີ່ເປັນເຂດປ່າສະຫງວນໃນປະຈຸບັນ ຊຶ່ງອາດມາຈາກເມືອງຍົມມະລາດ ທີ່ໜີຈາກນະໂຍບາຍການກວດຕ້ອນເອົາ ຂອງພວກໄທ ຊຶ່ງໄດ້ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ຢູ່ເຂດທົ່ງພຽງ. ນອກຈາກນັ້ນ, ໃນຊ່ວງໄລຍະນີ້ ໂດຍເລີ່ມຕົ້ນແຕ່ປະມານປີ 1880, ປະຊາຊົນທີ່ປາກພາສາໄຕ ຈາກແຂວງຫົວພັນ ແລະ ແຫງະອານ ໄດ້ລັ່ງໄຫລເຂົ້າມາເມືອງຄຳເກີດ ເພື່ອໜີຈາກສົງຄາມເຈີງ ທີ່ດຳເນີນໂດຍພວກຂະມຸຢູ່ເຂດນັ້ນ. |
| **1900-1960** | ລັດທິລ່າເມືອງຂຶ້ນຝຣັ່ງໄດ້ເຂົ້າມາເຂດຫລັກ 20 ແລະ ໄດ້ມີການຄ້າຂາຍກັບຊາວຫວຽດນາມຕາມເສັ້ນທາງເລກ 8. ການຂຸດຄົ້ນໄມ້ທີ່ກ່ຽວຂ້ອງບາງຢ່າງແມ່ນ ຢູ່ຕາມເຂດຮ່ອມພູ ຊຶ່ງໃນປະຈຸບັນ ແມ່ນເຂດທີ່ໄດ້ສະເໜີຂະຫຍາຍອອກ ຢູ່ດ້ານເໜືອ ຊຶ່ງເຊື່ອວ່າເກີດຂຶ້ນໃນຊ່ວງເວລານີ້. |
| **1960-1975** | ການສູ້ຣົບກັນລະຫວ່າງ ກອງທັບຝ່າຍປະເທດລາວ/ຫວຽດນາມເໜືອ ແລະ ລັດຖະບານລາດຊະອານາຈັກລາວ/ລັດຖະບານ ສະຫະລັດອາເມລິກາປະທຸຂຶ້ນຢູ່ໃນພື້ນທີ່. ຢູ່ເຂດປ່າສະຫງວນປະຈຸບັນ ແລະ ຈຸດສຳຄັນຕ່າງໆຂອງເສັ້ນທາງໂຮຈິ່ມິນ ໄດ້ມີກອງກຳລັງທະຫານຫວຽດນາມຫລາຍກວ່າ 1.000 ຄົນ ຕັ້ງຄ້າຍຢູ່ - ສ່ວນໃຫຍ່ແມ່ນຢູ່ຕາມເສັ້ນທາງເລກ 8 ແລະເສັ້ນທາງເລກ 12 ທີ່ຜ່ານພູພຽງນາກາຍ. ດັ່ງນັ້ນ, ຈຶ່ງເປັນເຫດໃຫ້ພື້ນທີ່ນີ້ຖືກຖິ້ມລະເບີດຢ່າງໜັກໜ່ວງຈາກລັດຖະບານສະຫະລັດອາເມລິກາ, ເຂດປ່າສະຫງວນທັງໝົດແມ່ນໄດ້ຮັບຜົນກະທົບຢ່າງຮ້າຍແຮງຈາກການຖິ້ມລະເບີດດັ່ງກ່າວ. |
| **1976-1990** | ຈາກໄຊຊະນະຂອງການປະຕິວັດ, ຈຶ່ງໄດ້ມີການສ້າງຄ້າຍສຳມະນາຂຶ້ນ ຢູ່ເຂດພູພຽງນາກາຍ ແລະ ເພື່ອໃຫ້ປະຊາຊົນມີບ່ອນຕັ້ງຖິ່ນຖານ ໄດ້ໄດ້ຍົກຍ້າຍ ປະຊາຊົນຈຳນວນໜຶ່ງທີ່ປາກພາສາຫວຽດຕິກເຂົ້າມາເຂດບ້ານທີ່ຕັ້ງໃໝ່ນີ້ (ເຊັ່ນ: ບ້ານທ່າເມືອງ). ໂຄງການສຳຫລວດໄມ້ ແລະ ດິນທີ່ສະຫະພາບໂຊວຽດໃຫ້ການສະໜັບສະໜູນ ກໍໄດ້ປະຕິບັດໄປທົ່ວພື້ນທີ່. ທະຫານໄດ້ເຂົ້າມາຄວບ |

| | |
|---|---|
| | ຄຸມພື້ນທີ່ດັ່ງກ່າວ ຜ່ານ ບໍລິສັດພັດທະນາເຂດພູດອຍ, ບໍລິສັດດັ່ງກ່າວໄດ້ຂຸດຄົ້ນຊັບພະຍາກອນປ່າໄມ້ ຢູ່ເຂດພູພຽງນາກາຍ ແລະ ສ່ວນຕ່າງໆ ຂອງປ່າສະຫງວນແຫ່ງຊາດ ຢູ່ເມືອງຄຳເກີດ. |
| **1991-1996** | ໂຄງການເຂື່ອນໄຟຟ້ານໍ້າຕົກ ນໍ້າເທີນ 2 ໄດ້ຖືກສະເໜີຢ່າງເປັນທາງການຕໍ່ ລັດຖະບານ ແຫ່ງ ສປປ ລາວ ແລະ ໄດ້ເລີ່ມຕົ້ນການກະກຽມຕ່າງໆ. ການອະນາໄມ້ອອກຈາກເຂດພູພຽງນາກາຍ (ເຊັ່ນ: ເຂດທີ່ນ້ຳຈະຖ້ວມ) ໄດ້ມີເນື້ອທີ່ເພີ່ມຂຶ້ນຮອດ 150,000 ແມັດກ້ອນ ຕໍ່ປີ ແລະ ໄດ້ມີການຂຸດຄົ້ນໄມ້ ໂລ່ງເລັ່ງ (*Fokenia*) ຢູ່ເຂດປ່າສະຫງວນແຫ່ງຊາດ. ເຂດປ່າສະຫງວນແຫ່ງຊາດແມ່ນໄດ້ຖືກສ້າງຕັ້ງຂຶ້ນຢ່າງເປັນທາງການໃນປີ1993. ການສຳຫລວດສັດປ່າຢ່າງເປັນລະບົບ ແມ່ນໄດ້ເລີ່ມປະຕິບັດໃນປີ 1995. ໃນປີ 1996, ອົງການອະນຸລັກທຳມະຊາດໂລກ (IUCN) ແລະ ອົງການອະນຸລັກສັດປ່າ (WCS) ໄດ້ໃຫ້ການສະໜັບສະໜູນໃນດ້ານການຄຸ້ມຄອງຈັດສັນສິ່ງແວດລ້ອມແກ່ໂຄງການນໍ້າເທີນ2 ໂດຍພາຍໃຕ້ເງື່ອນໄຂຕົກລົງຂອງ ລັດຖະບານລາວ ແລະ ທະນາຄານໂລກ. ໂຄງການນໍ້າເທີນ2 ໄດ້ມີການຊັກຊ້າແມ່ນຍ້ອນການກາຍເວລາ ຂອງການເຊັນບົດບັນທຶກຄວາມເຂົ້າໃຈ(MOU)ໃນການຊື້ພະລັງງານໄຟຟ້າ ຂອງ ອົງການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ (EGAT) ແລະວິກິດການທາງດ້ານເສດຖະກິດຂອງພູມີພາກອາຊີ. |
| **1997-1999** | ເພື່ອຮັບປະກັນໃຫ້ໂຄງການເຂື່ອນໄຟຟ້ານໍ້າເທີນ 2 ໄດ້ຖືກກໍ່ສ້າງ, ລັດຖະບານລາວ ແລະ ທະນາຄານໂລກໄດ້ສະໜອງງົບປະມານໃຫ້ ອົງການອະນຸລັກທຳມະຊາດໂລກ (IUCN) ແລະ ອົງການອະນຸລັກສັດປ່າ (WCS) ສ້າງແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂຶ້ນໃນພື້ນທີ່, ຊຶ່ງຜົນໄດ້ຮັບແມ່ນແຜນຍຸດທະສາດ ການຄຸ້ມຄອງສິ່ງແວດລ້ອມແລະສັງຄົມ. ກິດຈະກຳການພັດທະນາຊຸມຊົນ ແລະ ການອະນຸລັກຊີວະນາໆພັນ ແມ່ນໄດ້ລິເລີ່ມຂຶ້ນ. ການປະເມີນໂຄງການນໍ້າເທີນ2 ໄດ້ຖືກເລື່ອນອອກຕື່ມ ແລະ ມື້ເລີ່ມຕົ້ນການກໍ່ສ້າງ ເຂື່ອນນໍ້າເທີນ2 ແມ່ນຄາດວ່າຈະຢູ່ໃນເດືອນທັນວາ 2001 ແລະຈະສຳເລັດລົງໃນທ້າຍປີ 2006. |
| **2001** | ດຳລັດເລກທີ 25 |
| **2005** | ແຜນວຽກປະຈຳປີສະບັບທຳອິດ ສຳລັບອົງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນໍ້າ ໄດ້ຮັບອະນຸມັດພ້ອມງົບປະມານເຄື່ອນໄຫວວຽກ 1 ລ້ານໂດລາສະຫະລັດ. |
| **2008** | ການປ່ອຍນໍ້າເຂົ້າອ່າງຄັ້ງທຳອິດ ໃນຊ່ວງລະດູຝົນ |
| **2010** | ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 471/ນຍ, ລົງວັນທີ 11 ພະຈິກ 2010 ວ່າດ້ວຍການຄຸ້ມຄອງ ເຂດປ່າສະຫງວນນາກາຍ ນໍ້າເທີນ ແລະ ເຂດແຫລ່ງນໍ້າເທີນ 2. |
| **2017** | ດຳລັດສະບັບເລກທີ 122/ນຍ, ລົງວັນທີ 21 ເມສາ 2017 ວ່າດ້ວຍອົງການປົກປັກຮັກສາ ແລະ ຄຸ້ມຄອງ ແຫລ່ງນໍ້າເທີນ 2 ກຳນົດຖານະທາງກົດໝາຍ, ພາລະໜ້າທີ່, ກົງຈັກການຈັດຕັ້ງ ແລະ ກົນໄກການຈັດຕັ້ງປະຕິບັດ ຂອງ ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນໍ້າເທີນ 2. |

## ການຄຸ້ມຄອງໃນປະຈຸບັນ

### ການປະກອບພະນັກງານຂອງປ່າສະຫງວນແຫ່ງຊາດ

ພາຍໃຕ້ດຳລັດເລກທີ 122/ນຍ, ລົງວັນທີ 21 ເມສາ 2018 ປ່າສະຫງວນໄດ້ມີກອງເລຂາ ຊຶ່ງແມ່ນຫ້ອງການບໍລິຫານ ຂອງອົງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນ້ຳເທີນ2. ອົງການນີ້ປະກອບດ້ວຍ ສະພາບໍລິຫານ ແລະ ກອງເລຂາ.

ກອງເລຂາປະກອບດ້ວຍຫົວໜ້າໜຶ່ງທ່ານ, ຮອງຫົວໜ້າໜຶ່ງທ່ານ ແລະ ພະນັກງານວິຊາການ ທີ່ເຮັດວຽກ ຢູ່ສຳນັກງານໃຫຍ່ ແລະ ຢູ່ພາກສະໜາມ. ຮອດເດືອນມັງກອນ 2018, ມີພະນັກງານວິຊາການປ່າສະຫງວນ 13 ຄົນ, ບໍ່ມີອາສາສະໝັກ. ພະນັກງານເຫລົ່ານີ້ໄດ້ຖືກຈັດແບ່ງອອກເປັນ ຫ້າໜ່ວຍງານວິຊາການ, ປະກອບດ້ວຍ (i) ໜ່ວຍງານບໍລິຫານ, (ii) ໜ່ວຍງານບັງຄັບໃຊ້ກົດໝາຍ, (iii) ໜ່ວຍງານຕິດຕາມ ແລະ ສຶກສາຄົ້ນຄວ້າຊີວະນາໆພັນ, (iv) ໜ່ວຍງານສະໜັບສະໜູນຊີວິດການເປັນຢູ່ ແລະ (v) ໜ່ວຍງານໂຄສະນາຊຸມຊົນ.

ນັບແຕ່ເດືອນຕຸລາ 2017, ກອງເລຂາອົງການຄຸ້ມຄອງ ແລະ ປົກປັກຮກສາ ແຫລ່ງນ້ຳ ໄດ້ເຂົ້າຮ່ວມເປັນຄູ່ຮ່ວມງານກັບທີມງານຂອງບັນດາອົງການທີ່ບໍ່ແມ່ນລັດຖະບານ ທີ່ເຮັດວຽກດ້ານການອະນຸລັກ/NGOs (ກຸ່ມ/Consortium). ກຸ່ມດັ່ງກ່າວ ໄດ້ປະກອບສ່ວນທັງທາງດ້ານ ການສ້າງຄວາມອາດສາມາດໃຫ້ ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫ່ງນ້ຳ ແລະ ສະໜອງແຜນຫ້າປີ. ວຽກງານດັ່ງກ່າວແມ່ນໄດ້ຮັບທຶນຈາກ ທະນາຄານໂລກ ຜ່ານບັນດາໂຄງການຍ່ອຍ ເລນ 2 (LENS2) ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ (EPF LENS 2) ທີ່ ອົງການຄຸ້ມຄອງ ແລະ ປົກປັກຮັກສາ ແຫ່ງນ້ຳ ໄດ້ຮັບມາ. ຈຸດປະສົງລວມຂອງວຽກງານດັ່ງກ່າວ ແມ່ນເພື່ອສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດຂອງ ກອງເລຂາອົງການຄຸ້ມຄອງ ແລະ ປົກປັກຮັກສາແຫ່ງນ້ຳ ແລະ ບັນດາຄູ່ຮ່ວມງານຂອງກອງເລຂາ ເພື່ອຮັບປະກັນ ປະສິດທິພາບຂອງການອະນຸລັກ ແລະ ການປົກປັກຮັກສາ ຊີວະນາໆພັນ ຂອງ ເຂດປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ ຜ່ານການຕອບສະໜອງ ຫ້າອົງປະກອບຮ່ວມກັນ ຂອງແຜນຫ້າປີ ແລະ ບັນດາຕົວຊີ້ວັດຜົນໄດ້ຮັບຂອງມັນ.

**ຕຶກອາຄານ**

ສຳນັກງານໃຫຍ່ຂອງປ່າສະຫງວນແຫ່ງຊາດ ແລະ ເຮືອນນອນຂອງພະນັກງານ ແມ່ນຕັ້ງຢູ່ຕົວເມືອງນາກາຍ, ສ້າງຂຶ້ນໃນປີ 2010. ສະຖານີກວດກາລາດຕະເວນ ແມ່ນຕັ້ງຢູ່ກຸ່ມບ້ານນາວາງ, ກຸ່ມໄທໄຜ່ບ້ານ ແລະ ກຸ່ມຕຶງ ຊຶ່ງຮອງຮັບບົດບາດໃນການຄຸ້ມຄອງແບບອະເນກປະສົງ. ຫ້ອງການໜຶ່ງແຫ່ງ ໄດ້ສະໜອງໄວ້ຢູ່ເຂດເມືອງຄຳເກີດ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຮ່ວມມືກັບ ບັນດາຫ້ອງການທີ່ກ່ຽວຂ້ອງຢູ່ຂັ້ນເມືອງ ແລະ ການເຄື່ອນໄຫວວຽກພາກສະໜາມ ຢູ່ເມືອງຄຳເກີດ. ຈຸດກວດກາຕາມເສັ້ນທາງໜຶ່ງແຫ່ງ ໄດ້ຮັບການຈັດຕັ້ງຂຶ້ນ ເພື່ອຕິດຕາມກວດກາ ແລະ ຄວບຄຸມການເຂົ້າອອກ ຈາກເຂດອ່າງເກັບນ້ຳ ໄປສູ່ເຂດອະນຸລັກພິເສດ ແລະ ເຂດດ້ານໃນຂອງປ່າສະຫງວນ.

**ລະບົບການປະສານສົມທົບ ແລະ ບັນດາພາກສ່ວນກ່ຽວຂ້ອງ**

ລະບົບການຄຸ້ມຄອງ ທີ່ມີການປະສານສົມທົບກັນ(Collaborative Management) ຢູ່ພາຍໃນເຂດປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ ໄດ້ຮັບອິດທິພົນຢ່າງແຂງແຮງຈາກ ລະບົບການຄຸ້ມຄອງ ທີ່ລະບຸຢູ່ໃນ ກອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນປະຕິບັດງານຄັ້ງທີໜຶ່ງ (SEMFOP 1). ຮູບແບບວິທີການນີ້ ເອີ້ນວ່າ “ການພັດທະນາ ແລະ ການອະນຸລັກແບບປະສົມປະສານທີ່ມີສ່ວນຮ່ວມ” ຫລື PICAD. ໂດຍຜ່ານຮູບແບບວິທີການນີ້, ບັນດາໜ່ວຍງານວິຊາການ ຢູ່ພາຍໃນເຂດປ່າສະຫງວນແຫ່ງຊາດ ຈະເຮັດວຽກຮ່ວມກັບ ບັນດາຄູ່ຮ່ວມງານຂັ້ນເມືອງຂອງພວກເຂົາ, ແລະ ໃຫ້ການສະໜັບສະໜູນດ້ານວິຊາການຕໍ່ ບັນດາບ້ານທີ່ຢູ່ພາຍໃນ ແລະ ບ້ານທີ່ຢູ່ເຂດກັນຊົນ.

**ສະພາບໍລິຫານ ຂອງ ປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ**

ປ່າສະຫງວນນາກາຍ ນ້ຳເທີນໄດ້ມີ ສະພາບໍລິຫານ ຊີ້ນຳ ເປັນເວລາ 13 ປີແລ້ວ ຊຶ່ງໂດຍທົ່ວໄປກໍແມ່ນມີໂຄງປະກອບ ພະນັກງານຄືເກົ່າ. ປະທານຂອງສະພາບດັ່ງກ່າວ ໄດ້ປ່ຽນຈາກ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ມາເປັນ ທ່ານ ຮອງເຈົ້າແຂວງ ແຂວງຄຳມ່ວນ, ແລະ ກັບຄືນມາເປັນ ລັດຖະມົນຕີກະຊວງກະສິກຳອີກຄັ້ງໜຶ່ງ. ສະມາຊິກຂອງສະພາ ທ່ານອື່ນໆ ປະກອບດ້ວຍ ບັນດາພະນັກງານຂັ້ນເມືອງ ແລະ ຂັ້ນແຂວງ ຈາກຂະແໜງການກະສິກຳ ແລະ ຈາກພາກສ່ວນ ທະຫານ. ກອງປະຊຸມສະໄໝສາມັນຂອງສະພາບໍລິຫານ ແມ່ນໄດ້ຈັດຂຶ້ນທຸກໆຫົກເດືອນ. ໂຄງປະກອບການຈັດຕັ້ງຂອງ ສະພາບໍລິຫານ ແມ່ນໄດ້ ກຳນົດໄວ້ຢູ່ໃນໝວດທີ 3 ແລະ 4 ຂອງດຳລັດສະບັບເລກທີ 122/ນຍ.

**ຄະນະວິຊາການປ່າສະຫງວນ**

ພາຍໃຕ້ ຄະນະກຳມະການຄຸ້ມຄອງຮ່ວມ ຂັ້ນເມືອງ(DCMC), ໄດ້ຈັດຕັ້ງຫ້າ ຄະນະວິຊາການຂຶ້ນ ໃນຂົງເຂດຕ່າງໆ ໃນ ການຄຸ້ມຄອງປ່າສະຫງວນ ໂດຍມີລະດັບຄວາມອາດສາມາດ ແລະ ຄວາມຊຳນານງານທີ່ແຕກຕ່າງກັນ.

**ຄະນະພັດທະນາ ແລະ ອະນຸລັກຂັ້ນເມືອງ**

ອົງການປົກຄອງເມືອງນາກາຍ, ຍົມມະລາດ ແລະ ຄຳເກີດ ໄດ້ສ້າງຕັ້ງ ຄະນະພັດທະນາ ແລະ ອະນຸລັກຂຶ້ນ ເພື່ອປະສານ ງານ ກັບກອງເລຂາ ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນ້ຳ ແລະ ເພື່ອອຳນວຍຄວາມສະດວກ ໃຫ້ກິດຈະກຳທີ່ ກ່ຽວຂ້ອງຕ່າງໆ. ຄະນະດັ່ງກ່າວປະກອບດ້ວຍ ທີມງານຊີ້ນຳ ຊຶ່ງນຳພາໂດຍທ່ານຮອງເຈົ້າເມືອງ, ແລະ ທີມງານວິຊາການ ນຳພາໂດຍຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

**ຄະນະພັດທະນາ ແລະ ອະນຸລັກ ຂັ້ນກຸ່ມບ້ານ**

ຄະນະພັດທະນາ ແລະ ອະນຸລັກຂັ້ນກຸ່ມບ້ານ ໄດ້ຖືກສ້າງຕັ້ງຂຶ້ນ ຢູ່ສາມກຸ່ມບ້ານ ປະກອບດ້ວຍ ສະມາຊິກ 19 ທ່ານ.

**ຄະນະພັດທະນາ ແລະ ອະນຸລັກ ຂັ້ນບ້ານ**

ຄະນະພັດທະນາ ແລະ ອະນຸລັກຂັ້ນບ້ານ ໄດ້ຖືກສ້າງຕັ້ງຂຶ້ນ ນັບແຕ່ໄດ້ສຳເລັດການວາງແຜນນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ປ່າໄມ້(FLUPAM). ປະຈຸບັນ, ຄະນະດັ່ງກ່າວ ໄດ້ຖືກສ້າງຕັ້ງຄືນໃໝ່ ເພື່ອປະຕິບັດຕາມ ແຜນການນາໃຊ້ທີ່ດິນແບບ ມີສ່ວນຮ່ວມ ຂອງລະບົບ ກອບການມີສ່ວນຮ່ວມຂອງຊຸມຊົນ(CEF).

**ການສະໜັບສະໜູນດ້ານການເງິນ**

ການສະໜັບສະໜູນດ້ານການເງິນທີ່ຕໍ່ເນື່ອງໄດ້ຕອບສະໜອງໃຫ້ ອົງການຄຸ້ມຄອງ ເຂດປ່າສະຫງວນແຫ່ງຊາດນາກາຍ ນ້ຳ ເທີນ ໂດຍເປັນພາກສ່ວນໜຶ່ງຂອງ ສັນຍາສຳປະທານ.

**ບຸລິມະສິດຂອງການຄຸ້ມຄອງໃນປະຈຸບັນ**

ບຸລິມະສິດຂອງການຄຸ້ມຄອງ ແມ່ນໄດ້ກ່າວໄວ້ຢູ່ໃນກອບການຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ ແລະ ແຜນ ປະຕິບັດງານໄລຍະຫ້າປີ(SEMFOP) ສາມແຜນຈັດສັນ (2016-2020).

**ສະພາບແວດລ້ອມດ້ານຊີວະ - ກາຍະພາບ**

**ລັກສະນະທາງພູມສັນຖານ**

ສາຍພູຫລວງພາຍໃນເຂດປ່າສະຫງວນ (ໄດ້ແບ່ງເຂດປ່າສະຫງວນອອກເປັນພູເຂດເໜືອ, ເຂດກາງ ແລະ ເຂດໃຕ້) ທີ່ເໜັ່ງຈາກທິດຕາເວັນຕົກສ່ຽງເໜືອ ຫາຕາເວັນຕົກສ່ຽງໃຕ້ ໄດ້ແບ່ງເຂດປ່າສະຫງວນອອກເປັນສ່ວນໆ ໂດຍຮ່ອມພູ ແລະ ສາຍນໍ້າ. ໂດຍສາຍນໍ້າເຫລົ່ານີ້ ໄດ້ປະກົດເຂດແດນທີ່ຈະແຈ້ງລະຫວ່າງພູແບ່ງເຂດ ແລະ ພູພຽງນາກາຍ, ສາຍນໍ້າສໍາຄັນທັງໝົດຫ້າສາຍ (ນໍ້າໂຊດ, ນໍ້າມອນ, ນໍ້າເທີນ, ນໍ້ານ້ອຍ ແລະ ນໍ້າອອນ) ທີ່ເປັນສາຍນໍ້າໃຫຍ່ ແລະ ໄຫລວຽນໄປມາ ຈຶ່ງເປັນເຫດໃຫ້ເກີດມີສະພາບປ່າແຄມນໍ້າ ທີ່ອຸດົມສົມບູນຂຶ້ນ. ສາຍພູແບ່ງເຂດນີ້ ໄດ້ເໜັ່ງແຕ່ທິດຕາເວັນຕົກສ່ຽງເໜືອ ຫາຕາເວັນອອກສ່ຽງໃຕ້ ຊຶ່ງມີລະດັບຄວາມສູງຮອດ 1.000 ແມັດ, ຊຶ່ງມັນໄດ້ເປັນເຂດແດນທີ່ແຍກພູພຽງນາກາຍ ອອກຈາກເຂດພູທາງເໜືອ, ພູເຂດໃຈກາງ. ສາຍນໍ້າເທີນໄດ້ໄຫລຫວິດ ອອກຈາກເຂດພູພຽງຢູ່ທາງດ້ານທິດຕາເວັນຕົກສ່ຽງເໜືອສຸດເຂດຂອງພູພຽງແລ້ວຫັກໄປທິດຕາເວັນຕົກ ໄຫລປ່ອງລົງໃສ່ນໍ້າກະດິງ ຕໍ່ລົງໃສ່ແມ່ນໍ້າຂອງເລີຍ. ລະດັບຄວາມສູງຂອງເຂດປ່າສະຫງວນແມ່ນ ຢູ່ລະຫວ່າງ 500-2.200 ແມັດ, ຊຶ່ງໃນນີ້ເຂດພູພຽງນາກາຍ ມີຄວາມສູງ 500-580 ແມັດ, ເຂດພູແບ່ງເຂດສູງ 600 – 1.100 ແມັດ ແລະ ເຂດພູໃຈກາງ ແລະ ໃຕ້ມີຄວາມສູງ 600 - 2.200 ແມັດ.

**ລະດັບຄວາມສູງ** 500 -2.200 ແມັດ ຈາກລະດັບນ້າທະເລ

**ສະພາບອາກາດ**

ເຂດປ່າສະຫງວນແຫ່ງຊາດນາກາຍ ນໍ້າເທີນ ແມ່ນຕົກຢູ່ເຂດລົມມໍລະສຸມອາຊີຕາເວັນອອກສ່ຽງໃຕ້. ໃນຊ່ວງລະດູໜາວ (ແຕ່ເດືອນ ພະຈິກ ຫາ ເດືອນກຸມພາ), ອາກາດຊຶ້ນຕາເວັນອອກສ່ຽງເໜືອທີ່ມີລັກສະນະສະເພາະຄືໜາວເຢັນ, ອາກາດແຫ້ງ ແລະ ມີຝົນຝອຍເປັນປະຈໍາ.

ສໍາລັບລະດູແລ້ງ (ເດືອນພຶດສະພາ -ສິງຫາ), ລົມຮ້ອນຈາກດ້ານຕະເວນອອກສ່ຽງໃຕ້ ໄດ້ພັດພາແລະນໍາເອົາຄວາມຊຸ່ມຊື່ນຈາກທະເລອັນດາມັນ ແລະ ອ່າວໄທ ຊຶ່ງເຮັດໃຫ້ໃນຊ່ວງລະດູຝົນມີຝົນຕົກໜັກ. ຊຶ່ງນີ້ແມ່ນເຂດລົມມໍລະສຸມຕາເວັນຕົກສ່ຽງໃຕ້. ສະພາບອາກາດຮ້ອນເອົ້າ ແລະ ມີຄວາມຊຶ້ນສູງ.

ສໍາລັບເຂດ ປ່າສະຫງວນແຫ່ງຊາດ ນາກາຍນໍ້າເທີນ ລົມມໍລະສຸມຕາເວັນຕົກສ່ຽງໃຕ້ ເລີ່ມຕົ້ນ ໃນເດືອນພຶດສະພາ ຈົນມີຄວາມຊຸ່ມຊື່ນສູງສຸດ ໃນເດືອນສິງຫາ ແລະຄ່ອຍໆເຈືອຈາງ ລົງຈົນສິ້ນສຸດ ໃນລະຫວ່າງກາງເດືອນຕຸລາ. ຈາກນັ້ນ ອາກາດກໍປ່ຽນແປງໄປ ໃນຊ່ວງກາງເດືອນພະຈິກ ເມື່ອລົມມໍລະສຸມຕາເວັນອອກສ່ຽງເໜືອເຄື່ອນຍ້າຍເຂົ້າມາແທນທີ່. ຝົນຈະຕົກເປັນປະຈໍາແຕ່ເປັນຝົນທີ່ເບົາບາງ, ສະພາບອາກາດມີຄວາມໜາວເຢັນ ແລະ ລະດັບຄວາມຊຶ້ນຕໍ່າ. ລົມມໍລະສຸມຕາເວັນອອກສ່ຽງເໜືອຈະສິ້ນສຸດລົງໃນທ້າຍເດືອນກຸມພາ ຊຶ່ງເປັນຊ່ວງທີ່ອາກາດຮ້ອນ ແລະ ແຫ້ງແລ້ງເລີ່ມຕົ້ນ.

ນອກຈາກໄດ້ຮັບອິດທິພົນຂອງລົມມໍລະສຸມແລ້ວ, ເຂດປ່າສະຫງວນແຫ່ງຊາດ ຍັງໄດ້ຮັບຜົນກະທົບຈາກພະຍຸໃຕ້ຝຸ່ນ ແລະ ພະຍຸຝົນລະດູຮ້ອນເປັນບາງຄັ້ງຄາວ. ພະຍຸໃຕ້ຝຸ່ນໄດ້ພັດຜ່ານເຂດພາກກາງຂອງລາວໂດຍສະເພາະແລ້ວໃນຊ່ວງເດືອນກັນຍາ ແລະ ເດືອນ ຕຸລາ.

ປະລິມານນໍ້າຝົນສະເລັ່ຍ 2.249 ມມ. ປະລິມານນໍ້າຝົນຢູ່ເຂດຍອດນໍ້າຕອນເທິງ ຂອງປ່າສະຫງວນແຫ່ງຊາດ ນາກາຍນໍ້າເທີນ ຄາດວ່າຈະມີປະລິມານທີ່ສູງກວ່າ, ແຕ່ຍັງບໍ່ທັນມີຂໍ້ມູນທີ່ໜ້າເຊື່ອຖືໄດ້ເທື່ອ, ບາງທີອາດຢູ່ລະຫວ່າງ 2.500 ຫາ 3.000 ມມ.

**ປະເພດປ່າທີ່ສໍາຄັນ**

ໃນເຂດປ່າສະຫງວນແຫ່ງຊາດນາກາຍ ນ້ຳເທີນ ແມ່ນມີສະພາບປ່າໄມ້ທີ່ສະລັບຊັບຊ້ອນຫລາຍໆປະເພດ ຊຶ່ງປະເພດປ່າເຫລົ່ານັ້ນແມ່ນມີຄວາມກ່ຽວຂ້ອງ ກັບຄວາມອຸດົມສົມບູນຂອງດິນ, ລະດັບຄວາມສູງ ແລະ ລັກສະນະອາກາດສະເພາະຖິ່ນ. ລັກສະນະຂອງຖິ່ນທີ່ຢູ່ອາໄສປະເພດຕ່າງໆ ປົກກະຕິມີລັກສະນະປະສົມປົນເປກັນໄປຈາກປະເພດໜຶ່ງ ປະສົມກັບອີກປະເພດໜຶ່ງ ແລະ ມັນກໍມີຄວາມຫຍຸ້ງຍາກທີ່ສຸດ ທີ່ຈະບອກໄດ້ຢ່າງຊັດເຈນເຖິງແຕ່ລະປະເພດປ່າ. ໃນແຕ່ລະປະເພດປ່າອົງປະກອບທາງດ້ານຊະນິດພັນຂອງພືດແມ່ນຮູ້ໄດ້ໜ້ອຍທີ່ສຸດ ຈົນກວ່າວ່າຈະໄດ້ມີການດຳເນີນແຜນງານການສຳຫລວດເກັບກຳທີ່ລະອຽດ.

ປ່າດົງດິບ ມີບັນດາຊະນິດພັນທີ່ຄຸ້ນເຄີຍ ແລະ ຮູ້ຈັກດີໃນທຸກໆສ່ວນຂອງພູມີພາກອາຊີຕາເວັນອອກສ່ຽງໃຕ້,            ໂດຍສະເພາະແລ້ວ ຈະພົບເຫັນພັນພືດຕະກູນໄມ້ຍາງ ແລະ ໄມ້ແຄນ(*Dipterocarpus* and *Shorea*) ໃນເຂດປ່າໄມ້ຍ່າງ ແລະ ຊະນິດພັນໄມ້ຈັດເທດ(Myristicaceae), ຕົ້ນໝາກຂັນທະລິດ/ໝາກຂຽບເທດ(Annonaceae), ຕົ້ນໝາກແຄ່ນ (Rutaceae), ໝາກຊັກ(Sapindaceae), ໄມ້ກໍກົດ(Fabaceae) ແລະ ອື່ນໆ. ເຮືອນຍອດສ່ວນເທິງຈະມີຄວາມສູງປະມານ 20 ແມັດ ປະປົນກັບບາງຕົ້ນທີ່ເຕີບໂຕ ຂະຫຍາຍຕົວດີ ອາດສາມາດສູງໄດ້ເຖິງ 30 ແມັດ. ຕົ້ນທີ່ໃຫຍ່ມີຂະໜາດໜ້າຕ້າງຢູ່ປະມານ 50-60 ຊມ ຫລື ບາງຕົ້ນເຕີບໂຕດີອາດມີໜ້າຕ້າງເກີນ 120 ຊມ. ໄມ້ຕະກູນປາມ ຊຶ່ງລວມມີທັງຫວາຍແມ່ນບໍ່ສູ້ມີຫລາຍຢູ່ທາງດ້ານເໜືອ ແຕ່ຈະມີຫລາຍໃນເຂດໃຈກາງ ແລະ ເຂດດ້ານໃຕ້. ປ່າຕົ້ນໝາກກໍ່ເທິງພູທີ່ຍັງບໍ່ທັນຖືກລົບກວນທຳລາຍ(Montane Fagaceous forest): ປະກົດຂຶ້ນຢູ່ບ່ອນທີ່ມີຄວາມສູງ ໄປທາງຊາຍແດນຫວຽດນາມທາງດ້ານໃຕ້ຂອງເຂດປ່າສະຫງວນແຫ່ງຊາດ ຊຶ່ງມີໄມ້ໂລ່ງເລ່ງເກີດຂຶ້ນກະຈັດກະຈາຍ. ເຂດປ່າດົງດິບທີ່ມີໄມ້ຕະກຸນໄມ້ກໍ່( Fagaceous) ສະແດງໃຫ້ເຫັນເຖິງຄວາມຫລາກຫລາຍຂອງການກ່ຽວຂ້ອງກັນຂອງຊະນິດພັນ ແລະ ຮູບແບບການກະຈາຍຂອງຊະນິດພັນ. ຢູ່ພາຍໃນເຂດປ່າໄມ້ກໍ່(Fagaceous) ແລະ ຕະກຸນອື່ນໆ, ບາງຊະນິດພັນແມ່ນເກີດຂຶ້ນທົ່ວໄປ, ພົບເຫັນໄດ້ຢູ່ທຸກບ່ອນ, ແລະ ບາງຊະນິດພັນກໍ ອາໄສເກີດຢູ່ບ່ອນສະເພາະຂອງມັນ. ປ່າໝອກປະກົດຂຶ້ນຢູ່ຕາມພູຕ່າງໆທາງໃຕ້ຂອງບ້ານນາແມວ. ຄວາມແຕກຕ່າງລະຫວ່າງປ່າໄມ້ກໍ່(Fagaceous) ພູເຂົາ ແລະ ປ່າພຸ່ມ (Ericaceous) ແມ່ນເຫັນໄດ້ຊັດເຈນທີ່ສຸດ, ປະກົດຂຶ້ນໃນຄວາມສູງປະມານ 1.600 ແມັດ. ຊະນິດພັນໄມ້ຕະກຸນພຸ່ມ  (Ericaceous) ຈະເປັນຊະນິດພັນທີ່ໂດດເດັ່ນທີ່ສຸດຢູ່ໃນຖິ່ນທີ່ຢູ່ອາໄສໃນແຖບນີ້, ໂດຍສະເພາະແມ່ນຕົ້ນແຫວ/ດອກທະກາງ( *Rhododendron* cf. *veitchianum* Hooker). ປ່າແຄມນ້ຳ ແມ່ນສະພາບຖິ່ນທີ່ຢູ່ອາໄສທີ່ມີພຽງແຕ່ພືດຕະກຸນຕົ້ນຊ້າປ່ານ( *Poikilospermum* (Urticaceae)) ທີ່ຖືກພົບເຫັນໄດ້. ຖິ່ນທີ່ຢູ່ອາໄສນີ້ ຮັກສາພືດເປັນຢາຫລາຍຊະນິດເອົາໄວ້. ຢູ່ເຂດນ້ຳໂຊດ ບໍລິເວນແຄມນ້ຳທີ່ຕື້ນ ແລະ ຫລາຍບ່ອນທີ່ມີນ້ຳຖ້ວມເປັນປະຈຳ, ອົງປະກອບຂອງຊະນິດພັນພືດ ແມ່ນຍັງບໍ່ສາມາດຮູ້ໄດ້ເທື່ອ ຈົນກວ່າຈະມີການເກັບກຳຂໍ້ມູນຢ່າງລະອຽດເສຍກ່ອນ.

ລັກສະນະສະເພາະອັນໜຶ່ງຂອງເຂດປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ ແມ່ນການເກີດຂຶ້ນຂອງ ‘ປ່າຊຶ້ມຕະຫລອດປີ’ ປ່າຊະນິດນີ້ແມ່ນເກີດຂຶ້ນຢູ່ໃນເຂດສາຍພູຫລວງ, ສະເພາະຢູ່ໃນບໍລິເວນສັນພູແຄບໆຊຶ່ງເປັນບ່ອນທີ່ບໍ່ມີຄວາມສູງຫລາຍ. ສັນພູນີ້ຈະໄດ້ຮັບອິດທິພົນຂອງລົມມໍລະສຸມຕາເວັນອອກສ່ຽງເໜືອ ຈາກຫວຽນດນາມຜ່ານຂ້າມຊາຍແດນເຂົ້າມາ ແລະເປັນຜົນໃຫ້ເຂດນີ້ ມີຝົນຕົກຮອດສິບເດືອນຕໍ່ປີ. ເຂດນີ້ ຈະປຽກຊຸ່ມທີ່ສຸດ ໃນລະຫວ່າງເດືອນມັງກອນ - ກຸມພາ ຊຶ່ງໃນເວລານີ້ ບັນດາເຂດໃກ້ຄຽງແມ່ນຈະຕົກຢູ່ທ່າມກາງລະດູແລ້ງ. ມັນໜ້າຈະເປັນໄປໄດ້ວ່າເຂດນີ້ ຈະມີຈຳນວນຊະນິດພັນພືດ ແລະ ສັດປ່າຈຳນວນຫລວງຫລາຍເປັນພິເສດ ຍ້ອນວ່າ ຖິ່ນທີ່ຢູ່ອາໄສແບບນີ້ແມ່ນ ບໍ່ມີຢູ່ບ່ອນໃດອີກ ໃນ ສປປ ລາວ.

**ສັດປ່າຊະນິດທີ່ສຳຄັນ**

ໄດ້ມີການສຳຫລວດຊີວະນາໆພັນແບບເຂັ້ມຂຸ້ນ ສາມການສຳຫລວດໃນຊ່ວງກາງປີ 1990 ປະກອບເຂົ້າເປັນບ່ອນອີງດ້ານຄວາມຮູ້ກ່ຽວກັບກຸ່ມສັດທີ່ມີກະສັນຫລັງ ທີ່ໄດ້ພົບເຫັນຢູ່ພາຍໃນເຂດປ່າສະຫງວນ. ການສຳຫລວດເຫລົ່ານີ້ ປະກອບດ້ວຍ "*ການສຳຫລວດສັດປ່າ ແລະ ຖິ່ນທີ່ຢູ່ອາໄສ ເບື້ອງຕົ້ນ ຂອງເຂດສະເໜີຂະຫຍາຍອອກຕື່ມທາງດ້ານເໜືອ ຂອງປ່າສະຫງວນແຫ່ງຊາດນາກາຍ ນໍ້າເທີນ ແລະ ເຂດນໍ້າຍ່ວງທີ່ຕິດແປະ, ສປປ ລາວ*". ປະຕິບັດໂດຍ Tizard (1996); "*ການສຳຫລວດສັດປ່າ ແລະ ຖິ່ນທີ່ຢູ່ອາໄສ ຂອງເຂດປ່າສະຫງວນແຫ່ງຊາດ ນາກາຍ ນໍ້າເທີນ, ແຂວງຄຳມ່ວນ ແລະ ບໍລິຄຳໄຊ, ສປປ ລາວ*' ປະຕິບັດໂດຍ Timmins, R. J. and Evans, T. D. (1996); ແລະ "*ບົດລາຍງານ ກ່ຽວກັບ ການສຳຫລວດເຈຍ 1996 ແລະ ສັດລ້ຽງລູກດ້ວຍນົມຂະໜາດນ້ອຍ ຢູ່ເຂດປ່າສະຫງວນແຫ່ງຊາດ ນາກາຍ ນໍ້າເທີນ ແລະ ພື້ນທີ່ໃກ້ຄຽງ*" ປະຕິບັດໂດຍ Francis *et al.* (1996); *ແລະ "ການສຳຫລວດສັດລ້ຽງລູກດ້ວຍນົມຂະໜາດໃຫຍ່ ຢູ່ເຂດໃຈກາງຂອງສາຍພູຫລວງ"* ປະຕິບັດໂດຍ Duckworth, J.W. (1998). ແນວໃດກໍ່ຕາມ, ຄວນຮັບຮູ້ວ່າ ສັດລ້ຽງລູກດ້ວຍນົມຂະໜາດໃຫຍ່ບາງຊະນິດ ເຊັ່ນ: ເສືອໂຄ່ງ ແລະ ເສືອລາ ໄດ້ມີຈຳນວນປະຊາກອນຫລຸດລົງຢ່າງໜັກໜ່ວງ, ຫລື ເຖິງຂັ້ນສູນພັນ ຢູ່ພາຍໃນພື້ນທີ່ອະນຸລັກ ໃນຊ່ວງໄລຍະທີ່ບໍ່ຕໍ່ເນື່ອງກັນ.

ແຜນງານຕິດຕາມສັດປ່າ(ໂດຍມີແລວສຳຫລວດປ່າໄມ້ ແລະ ກ້ອງດັກຖ່າຍ) ໄດ້ຈັດຕັ້ງຂຶ້ນໃນປີ 2005 ໂດຍການຊ່ວຍເຫລືອດ້ານວິຊາການ ຈາກອົງການອະນຸລັກສັດປ່າ. ແນວໃດກໍ່ຕາມ, ຫລັງປີ 2010 ແຜນງານດັ່ງກ່າວກໍ່ບໍ່ໄດ້ສືບຕໍ່ ແລະ ການສຳຫລວດກໍ່ບໍ່ໄດ້ເຮັດລົ້ມຄືນ ຊຶ່ງເປັນອຸປະສັກບໍ່ໃຫ້ມີການສຳຫລວດທ່າອ່ຽງດ້ານປະຊາກອນ. ແນວໃດກໍ່ຕາມ ໄດ້ທົບທວນຄືນຖານຂໍ້ມູນ ກ່ຽວກັບສັດກິນຊີ້ນຂະໜາດນ້ອຍ (Coudrat et al., 2014a), ເສືອຂະໜາດໃຫຍ່(non-Panthera cats (Coudrat et al., 2014b)) ແລະ ຄ່າງຊະນິດຕ່າງໆ (Coudrat and Nekaris, 2013). ຕັ້ງແຕ່ປີ 2013 ໂຄງການ ອະນຸລັກຂອງອົງການຝຣັ່ງ ໄດ້ປະຕິບັດແຜນງານການຕິດຕາມ ແລະ ຄົ້ນຄວ້າຊີວະນາໆພັນ ຢູ່ໃນພື້ນທີ່ດັ່ງກ່າວ ຊຶ່ງໄດ້ສຸມໃສ່ການສຳຫລວດ ຂາແດງ (red-shanked douc) (Coudrat et al., 2012; Coudrat et al.,2013), ທະນີແກ້ມຂາວ(white-cheeked gibbons (Coudrat et al., 2015),) ນາກນ້ຳ(Coudrat, 2015) ແລະ ສັດປ່າຊະນິດອື່ນໆ ໂດຍນຳໃຊ້ເຕັກນິກຕ່າງໆເຊັ່ນ: ກ້ອງດັກຖ່າຍຕິດກັບຕົ້ນໄມ້ ແລະ ວາງໄວ້ໜ້າດິນ, ດີເອັນເອ ທາງສິ່ງແວດລ້ອມ ແລະ ການສັງເກດເບິ່ງສັດ. ໂຄງການອະນຸລັກ ພ້ອມປະເມີນ ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນໍ້າ ພ້ອມທັງ ຍຸດທະສາດການຕິດຕາມຊີວະນາໆພັນຂອງພວກກ່ຽວ ຊຶ່ງກ່ຽວຂ້ອງກັບ ການສຳຫລວດຮອຍຕີນສັດ ແລະ ການຕັ້ງກ້ອງດັກຖ່າຍຢ່າງເປັນລະບົບ. ຈຸດປະສົງລວມ ຂອງຍຸດທະສາດດັ່ງກ່າວ ແມ່ນເພື່ອອຳນວຍຄວາມສະດວກໃຫ້ ການປະເມີນ ເບິ່ງວ່າ ປະຊາກອນຂອງສັດປ່າ ແລະ ໄພຂົ່ມຂູ່ ພວມເພີ່ມຂຶ້ນ, ຫລຸດລົງ ຫລື ຍັງຄົງເດີມ ອັນເປັນຜົນຮັບຈາກການເຂົ້າໄປຄຸ້ມຄອງຈັດສັນນັ້ນ.

ສັດລ້ຽງລູກດ້ວຍນົມທີ່ ໄດ້ຮັບຄວາມສົນໃຈໃນການອະນຸລັກ ຢູ່ເຂດປ່າສະຫງວນແຫ່ງຊາດ ນາກາຍ ນໍ້າເທີນ

| ຊື່ພາສາລາວ | ຊື່ພາສາອັງກິດ | ຊື່ທາງວິທະຍາສາດ | ຄວາມສຳຄັນລະດັບຊາດ | ປະເພດໄພຂົ່ມຂູ່ລະດັບສາກົນ | ສະພາບຄວາມສ່ຽງໃນລາວ |
|---|---|---|---|---|---|
| ລິ່ນງົວ | Chinese Pangolin | *Manis pentadactyla* | HNP | CR | ARL |
| ລິ່ນຄວາຍ | Sunda Pangolin | *Manis javanica* | HNP | CR | ARL |
| ບ່າງ | Sunda Colugo | *Cynocephalus variegatus* | - | LC | |
| ລີງລົມ | Slow Loris | *Nycticebus bengalensis* | - | VU | - |
| ລີງລົມນ້ອຍ | Pygmy Slow Loris | *Nycticebus pygmaeus* | - | VU | - |

| | | | | | |
|---|---|---|---|---|---|
| ລີງ | Pig-tailed Macaque | *Macaca leonina* | - | VU | PARL |
| ລີງພູເຂົາ | Assamese Macaque | *Macaca assamensis* | - | NT | PARL |
| ລີງວອກ | Rhesus Macaque | *Macaca mulatta* | - | LC | PARL |
| ລີງກັງ | Bear Macaque | *Macaca arctoides* | - | VU | PARL |
| ຄ່າງດຳ | Francois's Langur | *Trachypithecus sp.* | - | DD | PARL |
| ຂາແດງ | Red-shanked Douc Langur | *Pygathrix nemaeus* | HNP | EN | ARL |
| ທະນີແກ້ມຂາວ | White-cheeked Gibbon | *Nomascus siki/leucogenys* | HNP | DD | PARL |
| ກະຮອກແດງ | Black Giant Squirrel | *Ratufa bicolor* | - | NT | PARL |
| ກະຕ່າຍລາຍເສືອ | Annamite Striped Rabbit | *Nesolagus timminsi* | HNP | DD | LKL |
| ໝາໃນ | Dhole | *Cuon alpinus* | HNP | EN | ARL |
| ໝີຄວາຍ | Asiatic Black Bear | *Ursus thibetanus* | HNP | VU | ARL |
| ເໝືອຍ | Sun Bear | *Helarctos malayanus* | HNP | VU | ARL |
| ເຫງັນລາຍເສືອ | Owston's civet | *Chrotogale owstoni* | HNP | EN | LKL |
| ໝີຂໍ | Binturong | *Arctictis binturong* | INP | VU | ARL |
| ຈອນຟອນກ່ານຂາວ | Back-striped Weasel | *Mustela strigidorsa* | - | LC | LKL |
| ໝູລິ່ງ | Hog Badger | *Arctonyx collaris* | - | LC | LKL |
| ນາກນ້ຳ | Oriental Small-clawed Otter | *Aonyx cinereus* | HNP | VU | ARL |
| ນາກນ້ຳຊະນິດຕ່າງໆ | Otter species | *Species not identified* | - | - | - |
| ເຫງັນລາຍປ້ອງ | Spotted Linsang | *Prionodon pardicolor* | - | LC | LKL |
| ເສືອໄຟ | Asian Golden Cat | *Catopuma temminckii* | INP | - | LKL |
| ເສືອລາຍຫີນອ່ອນ | Marbled Cat | *Pardofelis marmorata* | INP | NT | LKL |
| ເສືອລາຍເມກ | Clouded Leopard | *Pardofelis nebulosi* | HNP | - | ARL |
| ເສືອດາວ | Leopard | *Panthera pardus* | HNP | VU | ARL |
| ເສືອໂຄ່ງ | Tiger | *Panthera tigris* | ANP | EN | ARL |
| ຊ້າງ | Asian Elephant | *Elephas maximus* | HNP | EN | ARL |
| ກວາງ | Sambar | *Rusa unicolor* | - | VU | PARL |
| ຟານເຂົາໃຫຍ່ | Large-antlered Muntjac | *Muntiacus vuquangensis* | - | CR | PARL |
| ຟານສາຍພູຫລວງ | Annamite Dark Muntjac | *Muntiacus truongsonensis* | - | DD | - |
| ເມີຍ (ກະທິງ) | Gaur | *Bos gaurus* | HNP | VU | ARL |
| ເຍືອງ | Southern Serow | *Capricornis milneedwardsii* | - | NT | PARL |
| ເສົາລາ | Saola | *Pseudoryx nghetinhensis* | ANP | CR | ARL |

ເຂດປ່າສະຫງວນ ມີເຈຍ 45 ຊະນິດ ແລະ ສັດຈຳພວກໜູ ແປດຊະນິດ

ນົກຊະນິດຕ່າງໆທີ່ໄດ້ຮັບຄວາມສົນໃຈໃນດ້ານການອະນຸລັກ ຢູ່ເຂດປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ

| ຊື່ພາສາລາວ | ຊື່ພາສາອັງກິດ | ຊື່ທາງວິທະຍາສາດ | ຄວາມສຳຄັນ | ປະເພດໄພ | ສະພາບຄວາມ |
|---|---|---|---|---|---|

| | | | ລະດັບຊາດ | ຂື່ມຂູ່ລະດັບສາກົນ | ສ່ຽງໃນລາວ |
|---|---|---|---|---|---|
| ໄກ່ຂວາ | Siamese Fireback | *Lophura diardi* | - | LC | PARL |
| ນົກວູວ່າວ | Crested Argus | *Rheinardia ocellata* | HNP | NT | ARL |
| ນົກເປັດກ່າ | White-winged Duck | *Cairina scutulata* | ANP | EN | ARL |
| ນົກໃສ່ | Red-collared Woodpecker | *Picus rabieri* | - | NT | 0 |
| ນົກກົກຄໍຄໍາ | Great Hornbill | *Buceros bicornis* | HNP | NT | ARL |
| ນົກແກງສີນໍ້າຕານ | Brown Hornbill | *Anorrhinus tickelli* | - | NT | PARL |
| ນົກກົກຄໍແດງ | Rufous-necked Hornbill | *Aceros nipalensis* | HNP | VU | ARL |
| ນົກກົກຄໍເອິມ | Wreathed Hornbill | *Aceros undulates* | - | 0 | ARL |
| ກະເຕັນເຣີຄິວລິດ | Blyth's Kingfisher | *Alcedo Hercules* | - | NT | PARL |
| ນົກໂກໂລໂກໂສ | Coral-billed Ground Cuckoo | *Carpococcyx renauldi* | - | LC | 0 |
| ນົກເຄົ້າກິນປາ | Tawny Fish Owl | *Ketupa flavipes* | - | LC | LKL |
| ນົກເຄົ້າຊະນິດຕ່າງໆ | Fish owl species | *Species not identified* | - | - | - |
| ນົກເປົ້າຫາງເຂັ້ມ | Yellow-vented Green Pigeon | *Treron seimundi* | - | LC | 0 |
| ນົກເປົ້າທ້ອງຂາວ | White-bellied Green Pigeon | *Treron sieboldin* | - | 0 | LKL |
| ນົກລຸມພູ | Green Imperial Pigeon | *Ducula aenea* | - | LC | ARL |
| ນົກກະແຕຫາດ | Wood Snipe | *Gallinago nemoricola* | - | VU | LKL |
| ນົກກະແຕຫົວເທົາ | River Lapwing | *Vanellus duvaucelii* | INP | NT | ARL |
| ນົກແອ່ນທົ່ງນ້ອຍ | Grey-headed Lapwing | *Vanellus cinereus* | - | LC | PARL |
| ແຫລວສີນໍ້າຕານ | Small Pratincole | *Glareola lacteal* | - | 0 | PARL |
| ແຫລວດໍາ | Jerdon's Baza | *Aviceda jerdoni* | - | LC | 0 |
| ແຫລນ້ອຍຫົວເທົາ | Black Kite | *Milvus migrans* | - | LC | ARL |
| ແຫລວປາຫົວໜິ່ນນ້ອຍ | Lesser Fish Eagle | *Ichthyophaga humilis* | INP | NT | ARL |
| ນົກກະສານອນ | Pied Falconet | *Microhierax melanoleucos* | - | LC | LKL |
| ນົກກະສາແດງ | Grey Heron | *Ardea cinerea* | - | LC | PARL |
| ນົກກະສາດໍາ | Purple Heron | *Ardea purpurea* | - | LC | PARL |
| ນົກແຕວແລວໃຫຍ່ | Black Stork | *Ciconia nigra* | - | LC | ARL |
| ນົກກະຈິວ | Blue-rumped Pitta | *Pitta soror* | - | LC | PARL |
| ນົກສາລິກາປີກຂາວ | White-winged Magpie | *Urocissa whiteheadi* | - | EN | PARL |
| ນົກພະຍາໄຟ | Indochinese Green Magpie | *Cissa hypoleuca* | - | LC | PARL |
| ນົກກະຈິບ | Swinhoe's Minivet | *Pericrocotus cantonensis* | - | LC | 0 |
| ນົກເດີນດົງເອິກເທົາ | Japanese Paradise-flycatcher | *Terpsiphone paradisi* | - | LC | LKL |
| ນົກເດີນດົງເອິກດໍາ | Black-breasted Thrush | *Turdus dissimilis* | - | LC | LKL |
| ນົກມຸດນໍ້າ | Grey-sided Thrush | *Turdus feae* | - | VU | LKL |
| ນົກປີກແພສີຂຽວ | Brown Dipper | *Cinclus pallasii* | - | LC | PARL |

| | | | | | |
|---|---|---|---|---|---|
| ນົກອ້ຽງຫົວສີເຫລືອງ | Green Cochoa | *Cochoa viridis* | - | LC | 0 |
| ນົກໄຕ່ໄມ້ | Golden-crested Myna | *Ampeliceps coronatus* | - | LC | PARL |
| ນົກກະຈິດຄໍດໍາ | Beautiful Nuthatch | *Sitta Formosa* | - | VU | PARL |
| ນົກກະລາງ | Yellow-vented Warbler | *Phylloscopus cantator* | - | LC | 0 |
| ນົກກະລາງຫາງແດງ | Grey Laughingthrush | *Garrulax maesi* | - | LC | 0 |
| ນົກກະລາງໄພ | Red-tailed Laughingthrush | *Garrulax milnei* | - | LC | 0 |
| ນົກມຸ່ນລິກ | Short-tailed Scimitar Babbler | *Jabouilleia danjoui* | - | NT | PARL |
| ນົກມຸ່ນລິກຄໍແດງ | Spectacled Fulvetta | *Alcippe ruficapilla* | - | LC | 0 |
| ນົກປາກນົກແກ້ວ | Rufous-throated Fulvetta | *Alcippe rufogularis* | - | LC | 0 |
| ນົກປາກນົກແກ້ວຫົວສີສົ້ມ | Lesser Rufous-headed Parrotbill | *Paradoxornis atrosuperciliaris* | - | LC | LKL |

ປ່າສະຫງວນແຫ່ງຊາດໄດ້ຈົດບັນທຶກ ຊະນິດພັນ ສັດເລືອຄານ ແລະ ສັດເຄິ່ງບົກເຄິ່ງນໍ້າ ຈໍານວນ 53 ຊະນິດ. ຕາມການສໍາຫລວດຫວ່າງບໍ່ດົນມານີ້ (Robichaud and Stuart 1999) ໄດ້ລະບຸ ຊະນິດພັນ ສັດເລືອຄານ ແລະ ສັດເຄິ່ງບົກເຄິ່ງນໍ້າ ຈານວນ 51 ຊະນິດ ທີ່ຢູ່ພາຍໃນເຂດປ່າສະຫງວນ, ໃນນີ້ລວມມີ ສອງຊະນິດພັນໃໝ່ (a caecilian and a skink). ແນວໃດກໍຕາມ ເຊື່ອກັນວ່າ ຂໍ້ມູນນີ້ຍັງບໍ່ລະອຽດ ຍ້ອນວ່າການສໍາຫລວດບໍ່ໄດ້ປະຕິບັດໃນຊ່ວງ ເດືອນທີ່ມີອາກາດອົບອຸ່ນ ແລະ ບ່ອນທີ່ມີຄວາມສູງຫລາຍກວ່ານີ້ (ຫລາຍກວ່າ 800 ແມັດ).

## ການຈັດປະເພດຄວາມສໍາຄັນ

| |
|---|
| ປະເພດຄວາມສໍາຄັນລະດັບຊາດ<br>**ANP**: ສໍາຄັນລະດັບຊາດ; **HNP**: ສໍາຄັນລະດັບສູງ; **INP**: ສໍາຄັນລະດັບປານກາງ |
| ປະເພດຄວາມສໍາຄັນລະດັບສາກົນ<br>**0**: ບໍ່ໄດ້ຢູ່ໃນບັນຊີ ທີ່ໜ້າເປັນຫ່ວງ; **DD**: ຂາດຂໍ້ມູນ; **GNT**:ໃກ້ທີ່ຈະສູນພັນໃນລະດັບໂລກ; **GT-CR:** ໃກ້ທີ່ຈະສູນພັນ ລະດັບໂລກ ເຖິງຂັ້ນວິກິດ; **GT-EN**: ໃກ້ແລະສ່ຽງທີ່ຈະສູນພັນໃນລະດັບໂລກ **GT-VU**: ໃກ້ທີ່ຈະສູນພັນ ໃນລະດັບໂລກ-ມີຄວາມບອບບາງ; **n/a**: ບໍ່ໄດ້ຈັດລຽງ. |
| ***ສະຖານະພາບຄວາມສ່ຽງໄພໃນລາວ***<br>**0**: ບໍ່ມີຄວາມສ່ຽງໄພໃນລາວ; **ARL**: ສ່ຽງໄພໃນລາວ; **CARL**: ບາງເງື່ອນໄຂມີຄວາມສ່ຽງໄພໃນລາວ ; **LKL**: ຮູ້ບໍ່ໄດ້ລະອຽດໃນລາວ; **n/a**: ບໍ່ໄດ້ຈັດລຽງ; **PARL**: ມີຄວາມເປັນໄປໄດ້ຕໍ່ຄວາມສ່ຽງໄພໃນລາວ. |

(Duckworth *et al.*, 1999)

## ໄພຂົ່ມຂູ່ຕົ້ນຕໍ

ໄພຂົ່ມຂູ່ອັນຕົ້ນຕໍ ທີ່ມີຕໍ່ເຂດປ່າສະຫງວນແຫ່ງຊາດ ແມ່ນໄດ້ກໍານົດ ໂດຍຜ່ານ ຂະບວນການປຶກສາຫາລືຮ່ວມກັບບ້ານຫວ່າງບໍ່ດົນມານີ້ (ວົງຄໍາແຫງ, 2017). ໃນນີ້ລວມມີ:

- ການເພີ່ມຂຶ້ນຂອງການລັກລອບລ່າສັດ ຢູ່ພາຍໃນເຂດປ່າສະຫງວນ ໂດຍປະຊາຊົນຊາວຫວຽດນາມ ທີ່ຂ້າມຊາຍແດນເຂົ້າມາໃນພື້ນທີ່ດັ່ງກ່າວ

- ການເພີ່ມຂຶ້ນຂອງການລັກລອບລ່າສັດ ໂດຍປະຊາຊົນລາວ ທີ່ມາຈາກພື້ນທີ່ອ້ອມຂ້າງ ຊຶ່ງຢູ່ນອກເຂດປ່າສະຫງວນແຫ່ງຊາດ
- ການລັກລອບລ່າສັດ ແລະ/ຫລືການລ່າສັດແບບບໍ່ຍືນຍົງ ໂດຍປະຊາຊົນໃນຊຸມຊົນ ທີ່ອາໄສຢູ່ພາຍໃນ ເຂດປ່າສະຫງວນແຫ່ງຊາດ
- ການມີຢູ່ຂອງພວກພໍ່ຄ້າຄົນກາງ ຢູ່ພາຍໃນບ້ານ ທີ່ນອນຢູ່ໃນເຂດປ່າສະຫງວນແຫ່ງຊາດ ກະຕຸ້ນໃຫ້ເກີດມີການລັກລອບລ່າສັດ/ການລ່າສັດແບບບໍ່ຍືນຍົງ
- ການມີຈຸດທີ່ຕັ້ງ ຢູ່ໃກ້ກັບຊາຍແດນຫວຽດນາມ
- ການມີຢູ່ຂອງເຄື່ອງມືລ່າສັດ, ເຊັ່ນ: ແຫ້ວ, ປືນທີ່ຜະລິດຂຶ້ນເອງ ແລະ ອື່ນໆ
- ການສືບຕໍ່ລັກລອບຂຸດຄົ້ນໄມ້ລາຄາແພງ ເພື່ອສະໜອງໃຫ້ເຄືອຂ່າຍຄ້າຂາຍໄມ້ພາຍໃນປະເທດ, ແຕ່ໂດຍສ່ວນໃຫຍ່ແລ້ວ ແມ່ນເຄືອຂ່າຍການລັກລອບຄ້າຂາຍ ລະຫວ່າງປະເທດ
- ການເພີ່ມຂຶ້ນ ຂອງການບຸກລຸກ ເຂົ້າໃນປ່າສະຫງວນແຫ່ງຊາດ ໂດຍບຸກຄົນພາຍນອກ ຈາກພື້ນທີ່ອ້ອມຂ້າງ, ແລະພາກສ່ວນອື່ນໆ ເພື່ອຊອກຫາທີ່ດິນ.

## ບັນດາໂຄງການກໍ່ສ້າງພື້ນຖານໂຄງລ່າງ ແລະ ການຂຸດຄົ້ນແຮ່ທາດ

- ໂຄງການເຂື່ອນໄຟຟ້ານໍ້າຕົກ ນໍ້າເທີນ 2 ແມ່ນໂຄງການຂະໜາດ 1.088 ເມກາວັດ ຊຶ່ງໄດ້ຖ້ວມພື້ນທີ່ແມ່ນໍ້າເທີນ ໃນປີ 2008 ຢູ່ເບື້ອງທິດຕາເວັນຕົກສ່ຽງໃຕ້ ຂອງເຂດປ່າສະຫງວນ. ອ່າງເກັບນ້ຳມີພື້ນທີ່ນ້ຳຖ້ວມຫລາຍເຮັກຕາ, ແລະ ເຂດນໍ້າຖ້ວມຂະຫຍາຍອອກຈົນກວມເອົາ ຫ້າແມ່ນໍ້າສາຂາໃນຂອບເຂດ ທຸກໆ 10 – 15 ກມ. ເຂດສະຫງວນສາລັບເປັນເຂດນໍ້າຖ້ວມລວມທັງໝົດ 1.100 ກມ. ເຂດອ່າງເກັບນໍ້າ ເປັນຜົນເຮັດໃຫ້ມີການຍົກຍ້າຍ 18 ບ້ານຊົນເຜົ່າ. ເສັ້ນທາງເຂົ້າອອກເພື່ອການລັກລອບຂຸດຄົ້ນໄມ້ ສ່ວນໃຫຍ່ແມ່ນຄວບຄຸມໄດ້ແລ້ວ, ຕາມການຫ້າມຂຸດຄົ້ນໄມ້ (ໃນເດືອນພຶດສະພາ 2016). ໂຄງການດັ່ງກ່າວ ມີສັນຍາສໍາປະທານກັບ ລັດຖະບານແຫ່ງ ສປປ ລາວ ເພື່ອຕອບສະໜອງເງິນທຶນໃຫ້ການຄຸ້ມຄອງ ແຫລ່ງນໍ້າເຂດປ່າສະຫງວນ ນາກາຍ ນໍ້າເທີນ ໃນໄລຍະ 31 ປີ.
- ມີການຂຸດຄົ້ນໄມ້ ຢູ່ບ້ານຕ່າງໆໃນເຂດກັນຊົນຢູ່ເມືອງ ຄໍາເກີດ. ຄວາມພະຍາຍາມໃນການຂະຫຍາຍກິດຈະກໍາ ໄປສູ່ເຂດປ່າສະຫງວນ ໄດ້ມີອຸປະສັກຂັດຂວາງ.

## ສະພາບເສດຖະກິດ-ສັງຄົມ

### ປະຊາຊົນ ແລະ ບັນດາບ້ານທີ່ກ່ຽວຂ້ອງ

ໄດ້ລະບຸບ້ານສາມປະເພດ ເປັນບ້ານຄູ່ຮ່ວມງານບຸລິມະສິດ ອີງຕາມຈຸດທີ່ຕັ້ງຂອງບ້ານ ແລະ ຮູບແບບການນໍາໃຊ້ຊັບພະຍາກອນທໍາມະຊາດ:

I ບັນດາບ້ານທີ່ຕັ້ງຢູ່ພາຍໃນເຂດປ່າສະຫງວນແຫ່ງຊາດນາກາຍ ນໍ້າເທີນ

II ບັນດາບ້ານທີ່ຕັ້ງຢູ່ນອກເຂດປ່າສະຫງວນແຫ່ງຊາດນາກາຍ ນໍ້າເທີນໂດຍມີການນໍາໃຊ້ທີ່ດິນກະສິກໍາ ແລະຊັບພະຍາກອນອື່ນໆ ຢູ່ພາຍໃນເຂດປ່າສະຫງວນ

III ບັນດາບ້ານທີ່ຕັ້ງຢູ່ນອກເຂດປ່າສະຫງວນແຫ່ງຊາດ ນາກາຍ ນໍ້າເທີນ ທີ່ມີເຂດແດນຕິດຈອດກັບ ເຂດແດນຂອງປ່າສະຫງວນ ແລະ ມີການນໍາໃຊ້ຊັບພະຍາກອນ ນອກເໜືອຈາກການນໍາໃຊ້ທີ່ດິນ ຢູ່ພາຍໃນເຂດປ່າສະຫງວນ.

ຂໍ້ມູນປະຊາກອນ ແມ່ນໄດ້ເກັບກຳໂດຍ ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ໃນການສຳຫລວດພົນລະເມືອງແຫ່ງຊາດ ປະຈຳປີ 2015.

| ເມືອງ | ຈຳນວນບ້ານ | ຈຳນວນບ້ານ ແຕ່ລະປະເພດ | | | ປະຊາກອນ |
|---|---|---|---|---|---|
| | | I | II | III | |
| ຄຳເກີດ | 21 | 0 | 21 | 0 | 19,877 |
| ນາກາຍ | 29 | 13 | 0 | 16 | 17,048 |
| ຍົມມະລາດ | 7 | 0 | 0 | 7 | 3,903 |
| ບົວລະພາ | 2 | 0 | 0 | 2 | 3,009 |
| ລວມ | **59** | **13** | **21** | **25** | **43,837** |

ສະຖິຕິປະຊາກອນຂອງ 21 ບ້ານທີ່ຢູ່ອ້ອມຮອບປ່າສະຫງວນ ຢູ່ເມືອງຄຳເກີດ, ແຂວງ ບໍລິຄຳໄຊ ເຂດປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ.

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈຳນວນ ຫລັງຄາເຮືອນ | ຈຳນວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | ທົ່ງແປ | ໜອງອໍ້ | ມົ້ງ, ແມນ, ລາວລຸ່ມ | 307 | 2440 | ຊໍ້າຊ້ອນ |
| 2 | ນາເມືອງ | ທົ່ງແຄະ | ເມີຍ, ແມນ, ມົ້ງ, | 104 | 649 | ຊໍ້າຊ້ອນ |
| 3 | ນາໄຮ | ທົ່ງແຄະ | ເມີຍ, ແມນ | 90 | 492 | ຊໍ້າຊ້ອນ |
| 4 | ນາທ່ອນ | ທົ່ງແຄະ | ແມນ | 131 | 109 | ຊໍ້າຊ້ອນ |
| 5 | ນາກະດົກ | ທົ່ງແຄະ | ເມີຍ, ແມນ | 132 | 941 | ຊໍ້າຊ້ອນ |
| 6 | ທົ່ງແຄະ | ທົ່ງແຄະ | ມົ້ງ | 183 | 1056 | ຊໍ້າຊ້ອນ |
| 7 | ວັງຜາ | ທົ່ງແສນ | ມົ້ງ | 108 | 759 | ຊໍ້າຊ້ອນ |
| 8 | ນ້ຳເດີນ | ທົ່ງແສນ | ໄຕ, ເມີ້ຍ,ບໍ່, ກຣີ | 181 | 1185 | ຊໍ້າຊ້ອນ |
| 9 | ໜອງເມັກ | ທົ່ງແສນ | ໄຕ, ເມີ້ຍ | 119 | 585 | ຊໍ້າຊ້ອນ |
| 10 | ໂພນສີ | ທົ່ງແສນ | ລາວ; ແມນ | 91 | 464 | ຊໍ້າຊ້ອນ |
| 11 | ໂພນສະອາດ | ທົ່ງແສນ | ມົ້ງ, ມະກອງ | 227 | 1502 | ຊໍ້າຊ້ອນ |
| 12 | ກໍໄຮ | ທົ່ງແສນ | ມົ້ງ, ລາວ | 233 | 1652 | ຊໍ້າຊ້ອນ |
| 13 | ໂພນວິໄລ | ທົ່ງແສນ | ມົ້ງ, ລາວລຸ່ມ | 187 | 1505 | ຊໍ້າຊ້ອນ |
| 14 | ໂພນທອງ | ຄຳມ່ວນ | ມົ້ງ, ແມນ, ເມີຍ, ລາວລຸ່ມ | 379 | 2065 | ຊໍ້າຊ້ອນ |
| 15 | ສົບເປີນ | ຄຳມ່ວນ | ມົ້ງ, ເມີຍ, ແມນ, ລາວລຸ່ມ | 156 | 805 | ຊໍ້າຊ້ອນ |
| 16 | ດອນຊາດ | ຄຳມ່ວນ | ແມນ, ເມີຍ | 59 | 326 | ຊໍ້າຊ້ອນ |
| 17 | ຄຳມ່ວນ | ຄຳມ່ວນ | ແມນ, ເມີຍ, ລາວລຸ່ມ | 119 | 664 | ຊໍ້າຊ້ອນ |
| 18 | ດົງບັງ | ຄຳມ່ວນ | ແມນ, ເມີຍ, ລາວລຸ່ມ | 140 | 814 | ຊໍ້າຊ້ອນ |
| 19 | ຜາເມືອງຮຸ່ງ | ໜອງກົກ | ມົ້ງ, ແມນ, ເມີຍ, ລາວລຸ່ມ | 164 | 1132 | ຊໍ້າຊ້ອນ |
| 20 | ໂພນງາມ | ໜອງກົກ | ແມນ, ເມີຍ, ລາວລຸ່ມ, ມົ້ງ | 63 | 146 | ຊໍ້າຊ້ອນ |
| 21 | ນາງອຍ | ໜອງກົກ | ແມນ, ເມີຍ, ລາວລຸ່ມ, ມົ້ງ | 84 | 586 | ຊໍ້າຊ້ອນ |
| ລວມ | | | | **3,257** | **19,877** | |

(ອີງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນ້ຳ; ສູນສະຖິຕິແຫ່ງຊາດ, ການສຳຫລວດພົນລະເມືອງ ແຫ່ງຊາດ ປີ 2015).

ສະຖິຕິປະຊາກອນ ແລະ ຊົນເຜົ່າ ຢູ່ສອງບ້ານອ້ອມຮອບປ່າສະຫງວນ ຢູ່ເມືອງ ບົວລະພາ, ແຂວງ ຄໍາມ່ວນ, ເຂດປ່າສະຫງວນແຫ່ງຊາດ ນາກາຍ ນໍ້າເທີນ

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈໍານວນຫລັງຄາເຮືອນ | ຈໍານວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | ທົ່ງຂາມ | ທົ່ງຂາມ | ມະກ່ອງ | 336 | 2,064 | ຢູ່ນອກ |
| 2 | ລັງຄັງ | ລັງຄັງ | ມະກ່ອງ; ໂຢ້ຍ | 207 | 945 | ຢູ່ນອກ |
| ລວມ | | | | **453** | **3,009** | |

(ອີງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນໍ້າ; ສູນສະຖິຕິແຫ່ງຊາດ, ການສໍາຫລວດພົນລະເມືອງ ແຫ່ງຊາດ ປີ 2015).

ສະຖິຕິປະຊາກອນ ແລະ ຊົນເຜົ່າ ຢູ່ 7 ບ້ານອ້ອມຮອບປ່າສະຫງວນ ຢູ່ເມືອງ ຍົມມະລາດ, ແຂວງ ຄໍາມ່ວນ, ເຂດປ່າສະຫງວນແຫ່ງຊາດ ນາກາຍ ນໍ້າເທີນ

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈໍານວນ ຫລັງຄາ ເຮືອນ | ຈໍານວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | ທົ່ງກອງ | ນາບໍ່-ຊຽງດາວ | ໂຢ້ຍ | 127 | 503 | ຢູ່ນອກ |
| 2 | ນາບໍ່ | ນາບໍ່-ຊຽງດາວ | ໂຢ້ຍ | 111 | 504 | ຢູ່ນອກ |
| 3 | ຫາງການ | ຄໍາແຮ | ໂຢ້ຍ | 186 | 739 | ຢູ່ນອກ |
| 4 | ຂີ້ເຫລັກ | ຂີ້ເຫລັກ | ໂຢ້ຍ | 142 | 757 | ຢູ່ນອກ |
| 5 | ສ້າງປຸງບອນ | ສ້າງປຸງບອນ | ໂຢ້ຍ | 113 | 554 | ຢູ່ນອກ |
| 6 | ຄໍາແຮ່ | ຄໍາແຮ່ | ໂຢ້ຍ | 98 | 446 | ຢູ່ນອກ |
| 7 | ນາຖົ່ມ | ນາຖົ່ມ | ໂຢ້ຍ | 84 | 400 | ຢູ່ນອກ |
| ລວມ | | | | **861** | **3,903** | |

(ອີງການປົກປັກຮັກສາ ແລະ ຄຸ້ມຄອງແຫລ່ງນໍ້າ; ສູນສະຖິຕິແຫ່ງຊາດ, ການສໍາຫລວດພົນລະເມືອງ ແຫ່ງຊາດ ປີ 2015).

ສະຖິຕິປະຊາກອນ ແລະ ຊົນເຜົ່າ ຢູ່ 10 ບ້ານຕັ້ງໃໝ່ ຢູ່ເມືອງ ນາກາຍ,ເຂດປ່າສະຫງວນແຫ່ງຊາດ ນາກາຍ ນໍ້າເທີນ, ແຂວງ ຄໍາມ່ວນ

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈໍານວນ ຫລັງຄາ ເຮືອນ | ຈໍານວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | ບົວຈະເລີນ | ນາກາຍ | ໄຕແດງ; ໄຕດໍາ, ໄຕເມີ້ຍ; ໄຕເມັນ | 204 | 876 | ຢູ່ນອກ |
| 2 | ໜອງຮົ່ມ | ນາກາຍ | ໄຕແດງ; ໄຕດໍາ, ໄຕເມີ້ຍ; ໄຕເມັນ | 184 | 924 | ຢູ່ນອກ |
| 3 | ສົບມ້າ | ນາກາຍ | ໄຕເມີ້ຍ; ໄຕເມັນ | 112 | 456 | ຢູ່ນອກ |
| 4 | ນາກາຍ | ນາກາຍ | ໄຕເມີ້ຍ, ໄຕແດງ, ໄຕແອກ; ໄຕອີ; ໄຕ ເມັນ, ໄຕສົນ | 395 | 1823 | ຢູ່ນອກ |
| 5 | ອຸດົມສຸກ | ນາກາຍ | ໄຕເມັນ ໄຕເມີຍ, ໄຕແດງ; ໄຕແອກ, ໄຕເປົາ, ໄຕອີ, ໄຕສາມ. | 706 | 1442 | ຢູ່ນອກ |
| 6 | ຫ້ວຍມາໄລ | ນາກາຍ | ກະເລີງ; ມະກອງ; ງີ້ວ; ພອນ; ໄຕບໍ; ໄຕແດງ; ລາວ; ໄຕເມີຍ | 218 | 967 | ຢູ່ນອກ |
| 7 | ບົວມາ | ນາກາຍ | ມະກອງ; ຕຣີ້; ຟົງ; ໄຕບໍ | 112 | 456 | ຢູ່ນອກ |

| | | | | | | |
|---|---|---|---|---|---|---|
| 8 | ພົນສະອອນ | ນາກາຍ | ມະກອງ; ໄຕບໍ; ໄຕດຳ; ໄຕລາວ | 294 | 1160 | ຢູ່ນອກ |
| 9 | ດອນ | ນາກາຍ | ມະກອງ; ໄຕບໍ; ໂຍຍ | 224 | 1086 | ຢູ່ນອກ |
| 10 | ຂອນແກ່ນ | ນາກາຍ | ມະກ່ອງ | 78 | 333 | ຢູ່ນອກ |
| ລວມ | | | | **2527** | **9523** | |

(ອີງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນໍ້າ; ສູນສະຖິຕິແຫ່ງຊາດ, ການສຳຫລວດພົນລະເມືອງ ແຫ່ງຊາດ ປີ 2015).

ສະຖິຕິປະຊາກອນ ແລະ ຊົນເຜົ່າ ຢູ່ 13 ບ້ານ ທີ່ຢູ່ພາຍໃນ ເຂດປ່າສະຫງວນແຫ່ງຊາດ ນາກາຍ ນໍ້າເທີນ, ເມືອງ ນາກາຍ, ແຂວງ ຄຳມ່ວນ

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈຳນວນ ຫລັງຄາ ເຮືອນ | ຈຳນວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | ນາວາງ | ນາວາງ | ມະກ່ອງ | 116 | 605 | ຢູ່ພາຍໃນ |
| 2 | ຝັ່ງແດງ | ນາວາງ | ມະກ່ອງ | 108 | 609 | ຢູ່ພາຍໃນ |
| 3 | ນາຫາວ | ນາວາງ | ມະກ່ອງ | 185 | 1049 | ຢູ່ພາຍໃນ |
| 4 | ໜາກເຟືອງ | ທ່າໄຜ່ບ້ານ | ມະກ່ອງ | 120 | 659 | ຢູ່ພາຍໃນ |
| 5 | ທ່າໄຜ່ບ້ານ | ທ່າໄຜ່ບ້ານ | ມະກ່ອງ | 49 | 269 | ຢູ່ພາຍໃນ |
| 6 | ກໍບົງ | ທ່າໄຜ່ບ້ານ | ມະກ່ອງ | 61 | 342 | ຢູ່ພາຍໃນ |
| 7 | ວັງເທີນຄຳ | ທ່າໄຜ່ບ້ານ | ມະກອງ; ສະລ່າງ | 112 | 558 | ຢູ່ພາຍໃນ |
| 8 | ນາເມີຍ | ເຕີງ | ມະກອງ; ແຊກ | 128 | 299 | ຢູ່ພາຍໃນ |
| 9 | ປຸ່ງສານ | ເຕີງ | ມະກ່ອງ | 46 | 289 | ຢູ່ພາຍໃນ |
| 10 | ຕອງ | ເຕີງ | ມະກ່ອງ | 103 | 542 | ຢູ່ພາຍໃນ |
| 11 | ທົ່ງນ້ອຍ | ເຕີງ | ມະກ່ອງ | 57 | 359 | ຢູ່ພາຍໃນ |
| 12 | ເຕີງ | ເຕີງ | ແຊກ | 62 | 381 | ຢູ່ພາຍໃນ |
| 13 | ມະກາ | ເຕີງ | ມະກ່ອງ | 62 | 352 | ຢູ່ພາຍໃນ |
| ລວມ | | | | **209** | **6,313** | |

(ອີງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນໍ້າ; ສູນສະຖິຕິແຫ່ງຊາດ, ການສຳຫລວດພົນລະເມືອງ ແຫ່ງຊາດ ປີ 2015).

ສະຖິຕິປະຊາກອນ ແລະ ຊົນເຜົ່າ ຢູ່ 6 ບ້ານຢູ່ເຂດກັນຊົນ ຂອງ ເຂດປ່າສະຫງວນແຫ່ງຊາດ ນາກາຍ ນໍ້າເທີນ, ເມືອງ ນາກາຍ, ແຂວງ ຄຳມ່ວນ

| ລດ | ຊື່ບ້ານ | ກຸ່ມບ້ານ | ຊົນເຜົ່າ | ຈຳນວນ ຫລັງຄາ ເຮືອນ | ຈຳນວນຄົນ | ຈຸດທີ່ຕັ້ງ |
|---|---|---|---|---|---|---|
| 1 | ຜາດ່າງ | ນາຕານ | ເມີ້ຍ; ໄຕເມີນ | 67 | 342 | ຢູ່ນອກ |
| 2 | ນາຫ້າງ | ນາຕານ | ເມີ້ຍ; ໄຕເມີນ | 29 | 150 | ຢູ່ນອກ |
| 3 | ທ່າຂັນແກ້ວ | ນາຕານ | ເມີ້ຍ; ໄຕເມີນ | 55 | 344 | ຢູ່ນອກ |
| 4 | ນາບອນ | ນາຕານ | ເມີ້ຍ; ໄຕເມີນ | 24 | 149 | ຢູ່ນອກ |
| 5 | ນາຕານ | ນາຕານ | ເມີ້ຍ; ໄຕເມີນ | 27 | 165 | ຢູ່ນອກ |
| 6 | ດອນແກ້ວ | ເມືອງຫລວງ | ເມີ້ຍ; ໄຕເມີນ | 368 | 62 | ຢູ່ນອກ |
| ລວມ | | | | **570** | **1,212** | |

(ອີງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນໍ້າ; ສູນສະຖິຕິແຫ່ງຊາດ, ການສຳຫລວດພົນລະເມືອງ ແຫ່ງຊາດ ປີ 2015).

**ໂຄງປະກອບດ້ານຊົນເຜົ່າ**

ຢູ່ພາຍໃນເຂດປ່າສະຫງວນແຫ່ງຊາດ, ປະຊາກອນທັງໝົດປະມານ 6.500 ຄົນ ລ້ວນແຕ່ແມ່ນ “ເຜົ່າລາວເທີງ” ລວມມີຜູ້ທີ່ປາກພາສາຫວຽດຕົກຕ່າງໆ (ກຸ່ມມອນ-ຂະແມ) 31%, ບຣູ (ກະຕາງຕາເວັນຕົກ ຂອງ ກຸ່ມມອນ - ຂະແມ) 55%, ແລະ ໄຕ -ແຊກ (ໄຕ-ກະໄດ) 14%. ປະຊາກອນທີ່ເປັນເຜົ່າມົ້ງມີຈຳນວນເພີ່ມຂຶ້ນ ຢູ່ຕາມບໍລິເວນຂອບ ຂອງປ່າສະຫງວນ ຢູ່ເຂດເມືອງ ຄຳເກີດ, ແຂວງ ບໍລິຄຳໄຊ.

**ການນຳໃຊ້ຊັບພະຍາກອນທີ່ສຳຄັນຂອງທ້ອງຖິ່ນ**

ປະຊາຊົນ ຈຳນວນ 6.500 ຄົນ ຫລື ຫລາຍກວ່າ ທີ່ດຳລົງຊີວິດຢູ່ເຂດປ່າສະຫງວນ ແມ່ນອາໄສການເຮັດໄຮ່ໝູນວຽນ ຊຶ່ງກວມພື້ນທີ່ທັງໝົດ ປະມານ 3% ຂອງເຂດປ່າສະຫງວນ ໃນນີ້ລວມທັງເຂດປ່າເລົ່າ. ປະຊາຊົນເຫລົ່ານີ້ ຍັງນຳໃຊ້ ເຄື່ອງປ່າຂອງດົງຊະນິດຕ່າງໆເຂົ້າໃນຊີວິດປະຈຳວັນຂອງຕົນ(ເຊັ່ນ: ຫວາຍ, ອາຫານ, ໃບຄໍ້ ແລະ ອື່ນໆ) ແລະມີຈຳນວນໜຶ່ງກໍເກັບເຄື່ອງປ່າຂອງດົງຂາຍເປັນສິນຄ້າ (ເຊັ່ນ: ໝາກແໜ່ງ, ເປືອກບົງ ແລະ ອື່ນໆ). ນອກຈາກການຜະລິດກະສິກຳແລ້ວ ປະຊາຊົນສ່ວນໃຫຍ່ໃນນີ້ ຍັງອາໄສການຫາປາ ແລະ ການລ່າສັດ. ມີຈຳນວນໜຶ່ງທີ່ລ່າສັດເພື່ອຂາຍ. ການນຳໃຊ້ສັດປ່າ ແລະ ເຄື່ອງປ່າຂອງດົງທີ່ສຳຄັນນັ້ນ ໂດຍສ່ວນໃຫຍ່ຈະແມ່ນຄົນຈາກພາຍນອກ. ໄມ້ເກດສະໜາ (Eaglewood *Aquilaria sp.*)ເກືອບທັງໝົດ ໄດ້ຖືກຂຸດຄົ້ນໄປຈົນໝົດກ້ຽງແລ້ວ. ການສາປະທານຫວາຍໃນປີ 1996 – 1997 ເຫັນວ່າ ໄດ້ຂຸດຄົ້ນເອົາຫວາຍທີ່ມີໜ້າຕ້າງຂະໜາດໃຫຍ່ ອອກຈາກເຂດປ່າສະຫງວນໄປຈົນໝົດກ້ຽງ. ມີກຸ່ມຄົນຈາກຕ່າງປະເທດເຂົ້າມາເຄື່ອນໄຫວ ຢູ່ໃນເຂດປ່າສະຫງວນ ໃນຊ່ວງກາງຊຸມປີ 1980 ຈຳນວນຫລວງຫລາຍ ແລະ ພວກເຂົາໄດ້ສືບຕໍ່ດັບສູນສັດປ່າໃນຂອບເຂດທີ່ສຳຄັນຕ່າງໆ.

**ສະພາບການວາງແຜນນຳໃຊ້ທີ່ດິນ**

ພວມມີການທົບທວນຄືນ ການວາງແຜນນຳໃຊ້ທີ່ດິນ ແລະ ມີການປັບປຸງ ໃຫ້ສອດຄ່ອງກັບ ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ຂອງກອບການມີສ່ວນຮ່ວມຂອງຊຸມຊົນ ຊຶ່ງແມ່ນຕົວຊີ້ວັດໜຶ່ງ ເພື່ອເຂົ້າເຖິງ ແຫລ່ງເງິນທຶນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ.

**ຄຸນຄ່າດ້ານການທ່ອງທ່ຽວ**

ເຂດນາກາຍ ນ້ຳ◌້ເທີນ ຕັ້ງຢູ່ເສັ້ນທາງການທ່ອງທ່ຽວຫລັກ ຂອງແຂວງ ຄຳມ່ວນ, “ຈຸດສູນລວມ”, ຊຶ່ງຮັບຕ້ອນນັກທ່ອງທ່ຽວ ຈຳນວນ 10.000 ຄົນຕໍ່ປີໂດຍປະມານ ແລະ ພວມເພີ່ມຂຶ້ນ. ໂດຍພື້ນຖານນັກທ່ອງທ່ຽວ ແມ່ນເດີນທາງດ້ວຍລົດຈັກ, ມາເລີ່ມຕົ້ນ ແລະ ສິ້ນສຸດລົງ ຢູ່ເມືອງທ່າແຂກ ແລະ ໄປຢ້ຽມຊົມ ແຫລ່ງທ່ອງທ່ຽວທີ່ສຳຄັນຕ່າງໆ ຂອງແຂວງ ເຊັ່ນ: ຖ້ຳກອງລໍ່, ຫລັກຊາວ, ແລະ ຖ້ຳພະ. ນັກທ່ອງທ່ຽວສ່ວນໃຫຍ່ ຈະໄປຢູ່ຈຸດສູນລວມເພື່ອພັກແຮມໜຶ່ງຄືນ ຢູ່ເຂດບ້ານທ່າລັງ, ຕັ້ງຢູ່ ດ້ານທິດຕາເວັນຕົກສ່ຽງເໜືອ ຂອງ ອ່າງເກັບນ້ຳ ພຽງແຕ່ຂ້າມຈາກເຂດປ່າສະຫງວນໄປ. ຈຸດທີ່ຕັ້ງທີ່ເປັນເອກະລັກຂອງນາກາຍ ໄດ້ໃຫ້ໂອກາດທີ່ດີ ໃນການດຶງດູດ ຕະຫລາດການທ່ອງທ່ຽວຂອງແຂວງຄຳມ່ວນ. ນາກາຍ ກໍຍັງແມ່ນໄລຍະທາງທີ່ສາມາດຂັບລົດຈາກນະຄອນຫລວງວຽງຈັນໄດ້ໃນໜຶ່ງມື້, ເປັນທ່າແຮງໃນລະດັບກາງ ສຳລັບດຶງດູດເອົາຕະຫລາດ ພາຍໃນແລະ ຕ່າງປະເທດ.

ເຂດປ່າສະຫງວນແຫ່ງນີ້ ໃຫ້ໂອກາດທີ່ດີ ທີ່ສຸດໃນ ສປປ ລາວ ທີ່ຈະໄດ້ເຫັນ ຂາແດງ (Douc langurs) ແລະກໍອາດຈະເປັນໄປໄດ້ວ່າ ເປັນຈຸດທີ່ດີສົມຄວນ ໃນປະເທດລາວ ທີ່ຈະໄດ້ເຫັນຊ້າງ ແລະ ທະນີຊະນິດຕ່າງໆ. ນອກຈາກນັ້ນ ພື້ນທີ່ນີ້ກໍອາດຈະເປັນພື້ນທີ່ຕົ້ນຕໍທີ່ນັກທ່ອງທ່ຽວຈະສາມາດເຂົ້າມາເບິ່ງສັດປ່າຊະນິດຕ່າງໆຂອງສາຍພູຫລວງ, ຢູ່ເຂດປ່າສະຫງວນຂອງຫວຽດນາມ ມີຄວາມອຸດົມສົມບູນທາງດ້ານຊະນິດພັນທີ່ໜ້ອຍກວ່າ ແລະ ພື້ນທີ່ ທີ່ຄ້າຍຄືກັນຢູ່ ສປປ ລາວ ທີ່ມີການເຂົ້າເຖິງແລະການຂົນສົ່ງໄດ້ຍາກ. ປ່າຂະໜາດໃຫຍ່ ແລະໜາແໜ້ນຂອງນາກາຍ ມີໂອກາດທີ່ດີ ໃຫ້ແກ່ ການຕັ້ງແຄ້ມພັກແຮມ ຢູ່ກັບທຳມະຊາດ. ແມ່ນ້ຳຫລາຍສາຍໃນເຂດປ່າສະຫງວນ ຍັງມີທ່າແຮງ ໃຫ້ແກ່ການລ່ອງເຮືອ ກາຍັກ(kayaking) ແລະ ການລ່ອງເຮືອປະເພດອື່ນ, ເນື່ອງຈາກວ່າ ແມ່ນ້ຳຫລາຍສາຍຢູ່ບ່ອນອື່ນໆນັບມື້ຍິ່ງຖືກທຳລາຍ ແລະ ບໍ່ສາມາດເຂົ້າເຖິງໄດ້. ມີເສັ້ນທາງຫລາຍສາຍທີ່ມີທິວທັດສວຍງາມ, ລວມທັງ ເສັ້ນທາງ 8A (ຫລັກຊາວ - ຊາຍແດນຫວຽດນາມ). ພື້ນທີ່ດັ່ງກ່າວ ຍັງມີສະຖານທີ່ທ່ອງທ່ຽວທາງວັດທະນະທຳທີ່ໜ້າສົນໃຈ, ບົນພື້ນຖານຄວາມຫລາກຫລາຍທາງດ້ານຊົນເຜົ່າ ທີ່ພົບເຫັນໄດ້ຢູ່ພາຍໃນພື້ນທີ່ ຕາມຈຸດເຂົ້າບ້ານທີ່ສຳຄັນຕ່າງໆ ເໝາະແກ່ການທ່ອງທ່ຽວແບບຍ່າງປ່າ ແລະ ການທ່ຽວຊົມສັດປ່າ.

ການເດີນທາງເຂົ້າເຖິງແມ່ນໄປໄດ້ທາງເຮືອ ຈາກອ່າງເກັບນ້ຳ- ນ້ຳເທີນ 2, ແລ້ວໄປຕາມເສັ້ນທາງທ້ອງຖິ່ນຂອງບ້ານ ເຂົ້າໄປສູ່ ສາມກຸ່ມບ້ານ. ການເດີນທາງເຂົ້າໄປພື້ນທີ່ທຸລະກັນດານຫ່າງໄກສອກຫລີກ ຊຶ່ງມີຊະນິດພັນຕ່າງໆທີ່ອຸດົມສົມບູນນັ້ນຕ້ອງໄດ້ໃຊ້ເວລາຫລາຍພໍສົມຄວນ. ໃນປະຈຸບັນ ຍັງບໍ່ທັນມີບ່ອນພັກແຮມ ຫລື ການບໍລິການຕ່າງໆ ຢູ່ພາຍໃນເຂດປ່າສະຫງວນ, ແລະ ການເດີນທາງເຂົ້າໄປທ່ຽວ ກໍຕ້ອງໄດ້ຂໍອະນຸຍາດຢ່າງເປັນທາງການ ຊຶ່ງຮອດປະຈຸບັນແມ່ນຍັງມີກິດຈະກຳການທ່ອງທ່ຽວພຽງເລັກນ້ອຍ. ການມີຢູ່ຂອງພວກທີ່ລັກລອບ ເຂົ້າພື້ນທີ່ຊຶ່ງເປັນຄົນຕ່າງປະເທດ ແລະ ມີອາວຸດ ກໍແມ່ນຄວາມກັງວົນອັນໜຶ່ງ ທີ່ເຮັດໃຫ້ ພາກສ່ວນກ່ຽວຂ້ອງ ບໍ່ເປີດພື້ນທີ່ໃຫ້ເປັນບ່ອນທ່ອງທ່ຽວໄດ້ເທື່ອ. ໃນພື້ນທີ່ດັ່ງກ່າວ ກໍມີການລະບາດຂອງພະຍາດໄຂ້ມາເລເລຍ ທີ່ຍິ່ງເຮັດໃຫ້ ມີຄວາມເປັນຫ່ວງຫລາຍ ໃນດ້ານສຸຂະພາບ ແລະ ຄວາມປອດໄພ.

## ການກຳນົດເຂດ ແລະ ແຜນການຄຸ້ມຄອງ

ການຄຸ້ມຄອງ ເຂດປ່າສະຫງວນແຫ່ງຊາດນາກາຍ ນ້ຳເທີນ ແມ່ນໄປຕາມແນວທາງ ຂອງ ແຜນປະຕິບັດງານ ກອບການຄຸ້ມຄອງ ສິ່ງແວດລ້ອມແລະສັງຄົມຄັ້ງທີ 1(SEMFOP 1) ໃນໄລຍະ ເຈັດປີທາອິດ (ເດືອນເມສາ 2005 ຫາ ເດືອນກັນຍາ 2011) ຂອງ ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນ້ຳ. ແຜນປະຕິບັດງານ ກອບການຄຸ້ມຄອງ ສິ່ງແວດລ້ອມແລະສັງຄົມຄັ້ງທີ 1(SEMFOP 1) ໄດ້ຖືກຈັດແບ່ງອອກເປັນເຈັດພາກ. ແຜນຕິດຕາມຄືນ, SEMFOP 2 ໄດ້ຖືກຈັດຕັ້ງປະຕິບັດ ໃນລະຫວ່າງ ປີ 2012 ແລະ 2016. ແຜນຄຸ້ມຄອງຄັ້ງທີສາມ ຫລືໂຄງການຍ່ອຍ PAW/LENS2 (SEMFOP 3) ແມ່ນໄລຍະແຕ່ ປີ 2017 ຫາ 2021 ມີຈຸດປະສົງໃນການພັດທະນາ ເພື່ອຊ່ວຍສ້າງຄວາມເຂັ້ມແຂງ ໃຫ້ບັນດາລະບົບການຄຸ້ມຄອງການປົກຮັກສາສິ່ງແວດລ້ອມທີ່ຖືກຄັດເລືອກ, ໂດຍສະເພາະແມ່ນສຳລັບ ການອະນຸລັກ, ການບັງຄັບໃຊ້ກົດໝາຍປ່າໄມ້, ກົດໝາຍສັດນ້ຳແລສັດປ່າ, ແລະ ການຄຸ້ມຄອງການປະເມີນສິ່ງແວດລ້ອມ ຂອງປ່າສະຫງວນ.

ການກຳນົດເຂດ ຂອງປ່າສະຫງວນ ແມ່ນອີງໃສ່ ກົດໝາຍປ່າໄມ້. ເຂດປ່າສະຫງວນແຫ່ງຊາດນາກາຍ ນ້ຳເທີນ ໄດ້ຖືກແບ່ງເຂດອອກເປັນ ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້, ແລະ ເຂດເຊື່ອມຕໍ່. ການວາງແຜນນຳໃຊ້ທີ່ດິນ ແລະປ່າໄມ້ບ້ານ ໄດ້ສ້າງພື້ນຖານໃຫ້ການກຳນົດ ເຂດຄຸ້ມຄອງການນຳໃຊ້ ໃຫ້ 13 ບ້ານ ພາຍໃນສາມກຸ່ມບ້ານ, ປະກອບດ້ວຍກຸ່ມບ້ານນາວາງ, ໄຫໄຜ່ບ້ານ ແລະ ເຕີງ ແລະ ບາງບ້ານ ໃນເຂດກັນຊົນ. ນອກຈາກນັ້ນ, ການຕິດຕາມຊີວະນາໆພັນ ກໍໄດ້ກຳນົດ ສາມເຂດຊີວະນາໆພັນທີ່ເປັນບຸລິມະສິດ.

## ການປະກອບສ່ວນອັນສຳຄັນ ຕໍ່ລະບົບປ່າສະຫງວນ

**ຄຸນຄ່າດ້ານຊີວະນາໆພັນ**

ເຂດປ່າສະຫງວນແຫ່ງຊາດນາກາຍ ນ້ຳເທີນ ເປັນເຂດທີ່ກວ້າງໃຫຍ່ກວ່າໝູ່ ໃນ ສປປ ລາວ (3.710 ກິໂລຕາແມັດ) ແລະ ເປັນເຂດທີ່ມີຄວາມຫລາກຫລາຍທາງດ້ານປະເພດປ່າທຳມະຊາດກວ່າໝູ່ໝົດ. ຢູ່ປ່າສະຫງວນນາກາຍ ນ້ຳເທີນມີສັດປະເພດລ້ຽງລູກດ້ວຍນົມ ຂະໜາດໃຫຍ່ເຖິງສາມຊະນິດ ໃນຈຳນວນຫ້າຊະນິດພັນທີ່ຫາກໍ່ຄົ້ນພົບໃໝ່ ຫລື ຄົ້ນພົບຄືນອີກໃໝ່ ໃນໂລກ. ໃນນີ້ ພິເສດກວ່າໝູ່ແມ່ນ ເສົາລາ (Saola/ Pseudoryx nghetinhensis) (Dung et al 1993; Schaller & Robinowit 1994). ນອກຈາກນັ້ນ ຍັງມີຟານນ້ອຍ ແລະ ຟານໃຫຍ່(Megamuntiacus vuquangenesis) (Tuoc et al; Schaller & Vrba 1996) ກໍ່ເປັນຊະນິດພັນສັດປ່າທີ່ຄົ້ນພົບໃໝ່ໃນໂລກ ທີ່ມີຢູ່ໃນເຂດນາກາຍນ້ຳເທີນ. ໝູອາກຕິ (Warty Pig/ Sus bucculentus) ຊຶ່ງແຕ່ກ່ອນຄິດວ່າໄດ້ສູນພັນໄປແລ້ວ (Salter 1993) ແຕ່ກໍ່ໄດ້ຄົ້ນພົບຄືນໃໝ່ຢູ່ໃນເຂດນີ້ (Groves et all 1997). ຜ່ານການສາຫລວດໄດ້ສະແດງໃຫ້ເຫັນວ່າ ປ່າສະຫງວນເຂດນີ້ ແມ່ນມີຊະນິດພັນສັດປ່າປະເພດລ້ຽງລູກດ້ວຍນົມ ຫລາກຫລາຍປະເພດ. ມີສັດຈຳພວກຕະກູນລີງ (Primate) ຢ່າງໜ້ອຍ 9 ຊະນິດພັນ ໂດຍໃນນີ້ມີ 4 ຊະນິດພັນທີ່ສາຄັນໃນລະດັບໂລກ ທີ່ຍັງມີຢູ່ໃນເຂດປ່າສະຫງວນນາກາຍ ນ້ຳເທີນ (ລີງລົມນ້ອຍ, ຄ່າງຝຣັ່ງຊີວ ຫລື ຄ່າງດຳ, ຂາແດງ ແລະ ທະນີແກ້ມຂາວ).

ເລາະຕາມເສັ້ນທາງທີ່ນຳໃຊ້ລາກແກ່ໄມ້ທ່ອນ ໃນເມື່ອກ່ອນຢູ່ໃນເຂດປ່າສະຫງວນບ່ອນເຂດເໜືອບ້ານນາວາງ, ໄດ້ມີການບັນທຶກການພົບເຫັນສັດຈຳພວກກິນຊີ້ນ(Carnivore) ຈານວນ 16 ຊະນິດພັນ ແລະ ຊະນິດພັນອື່ນໆ ແມ່ນສາມາດພົບເຫັນໄດ້ໃນທົ່ວເຂດ. ສິ່ງນີ້ ສະແດງໃຫ້ເຫັນວ່າ ເຂດນີ້ແມ່ນມີສັດລ້ຽງລູກດ້ວຍນົມປະເພດກິນຊີ້ນ ທີ່ມີຫລາກຫລາຍຊະນິດພັນ ກວ່າເຂດອື່ນໆ ໃນ ສປປ ລາວ, ກຳປູເຈັຍ ແລະ ຫງວດນາມ. ໃນນີ້ຍັງມີເສືອແມວຫລາຍຊະນິດທີ່ໃກ້ຈະສູນພັນ ເຊັ່ນ: ເສືອປາ, ເສືອໄຟ, ເສືອລາຍຫີນອ່ອນ, ເສືອລາຍເມກ ແລະ ເສືອໂຄ່ງ. ຊຶ່ງບັນດານັກຊີວະວິທະຍາຍັງ ບໍ່ທັນໄດ້ພົບເຫັນໃນເຂດອື່ນ ຢູ່ໃນ ສປປ ລາວ.

ພູພຽງນາກາຍ ມີປະຊາກອນສັດລ້ຽງລູກດ້ວຍນົມຫລາຍຊະນິດທີ່ສຳຄັນ ລວມມີ ຊ້າງ ປະມານ 100 – 150 ໂຕ (Asian Elephants *Elephas maximus*); ປະຈຸບັນ ປະຊາກອນຊ້າງຈານວນໜຶ່ງ ຍັງສາມາດພົບເຫັນໄດ້ຢູ່ບ່ອນອື່ນໆອີກ ໃນ ສປປ ລາວ.

ໂດຍລວມແລ້ວ, ຜ່ານການສຳຫລວດຫວ່າງບໍ່ດົນມານີ້ ໄດ້ພົບວ່າ ຢູ່ເຂດປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ ມີສັດຈຳພວກນົກ ປະມານ 430 ຊະນິດ(Timmins & Evans, 1996; Tizard, 1996; Tobias, 1997). ຊຶ່ງເປັນເຂດທີ່ມີຊະນິດພັນນົກ ຫລາຍກວ່າທຸກໆເຂດ ເທົ່າທີ່ເຄີຍມີການສຳຫລວດຜ່ານມາ ໃນທົ່ວ ສປປ ລາວ, ແລະ ເປັນບ່ອນທີ່ມີການບັນທຶກໄວ້ສູງສຸດ ຢູ່ໃນ ບັນດາເຂດປ່າສະຫງວນ ໃນທົ່ວພູມີພາກອາຊີຕາເວັນອອກສ່ຽງໃຕ້. ໃນດ້ານຊະນິດພັນທີ່ສຳຄັນ ທີ່ມີຄວາມເປັນຫ່ວງດ້ານການອະນຸລັກ, ໃນເຂດປ່າສະຫງວນແຫ່ງຊາດ ໄດ້ພົບເຫັນວ່າມີ 56 ຊະນິດພັນ (43 ຊະນິດພັນອາໄສຢູ່/ສືບພັນ) ແລະ 43 ຊະນິດພັນ (36 ອາໄສຢູ່/ສືບພັນ). ຖ້າຫາກ ເປັນທີ່ຍອມຮັບໄດ້ວ່າ ໃນການທີ່ຈະຖືເອົານົກເປັນບ່ອນອີງທີ່ເໝາະສົມ ໃຫ້ແກ່ການປະເມີນຄວາມສຳຄັນຂອງພື້ນທີ່ອະນຸລັກສັດປ່າ (ທັງນີ້ກໍ່ເພາະວ່າມີຄວາມສະດວກຕໍ່ການກຳນົດອັນສະເພາະ, ການມີຂໍ້ມູນ ກ່ຽວກັບ ການກະຈາຍທີ່ລະອຽດ ແລະ ມາດຕະຖານການກຳນົດປະເພດຄວາມສ່ຽງລະດັບໂລກ), ສິ່ງທັງໝົດເຫລົ່ານີ້ ກໍ່ຈະເປັນຕົວສ້າງຕັ້ງ ປ່າສະຫງວນແຫ່ງຊາດນາກາຍ ນ້ຳເທີນ ໃຫ້ເປັນພື້ນທີ່ ສຳຄັນທີ່ສຸດທີ່ໄດ້ຜ່ານການສຳຫລວດໃນຂົງເຂດ ສປປ ລາວ, ກຳປູເຈັຍ ແລະ ຫວຽດນາມ.

ເຂດພູພຽງນາກາຍ ເປັນເຂດທີ່ສຳຄັນຕໍ່ນົກຫລາຍສາຍພັນທີ່ໃກ້ຈະສູນພັນ(WCS, 1995a; WCS, 1995b).

ການສຳຫລວດຢູ່ເຂດແມ່ນ້ຳເທີນ ແລະ ແມ່ນ້ຳເຊບັ້ງໄຟ ໄດ້ຍົກໃຫ້ເຫັນ ຄວາມຫລາກຫລາຍຂອງປາຊະນິດຕ່າງໆ ຊຶ່ງປະກອບດ້ວຍ ຊະນິດພັນທີ່ຢູ່ຖິ່ນອາໄສໃນເຂດຈຳກັດ ແລະ ຊະນິດພັນທີ່ມີຄວາມສຳຄັນສູງຕໍ່ການອະນຸລັກ(Kottelat 1996, Roberts 1996). ເຖິງແມ່ນວ່າ ນ້ຳເທີນຈະມີຄວາມຫລາກຫລາຍໜ້ອຍກວ່າ ແມ່ນ້ຳເຊບັ້ງໄຟກໍຕາມ (60 ຊະນິດພັນ ຕໍ່ 131 ຊະນິດພັນທີ່ເຊບັ້ງໄຟ) ແຕ່ມັນພັດມີຊະນິດພັນສະເພາະຖິ່ນຫລາຍກວ່າ ຢູ່ເຊບັ້ງໄຟ (18% ຕໍ່ 4% ຂອງເຊບັ້ງໄຟ, Kottelat 1996). ແນວໃດກໍຕາມ ເນື່ອງຈາກວ່າ ລະດັບຂອງຊະນິດພັນທີ່ມີຢູ່ສະເພາະຖິ່ນເຫລົ່ານີ້ ອາດຈະເປັນໜ້າທີ່ ຂອງເຂດທີ່ຍັງບໍ່ທັນໄດ້ມີການສຳຫລວດເຖິງ, ພວມມີການດຳເນີນງານຕື່ມ ຢູ່ບໍລິເວນແຫລ່ງນ້ຳທີ່ຢູ່ໃກ້ຄຽງເພື່ອໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບ ການກະຈາຍຂອງຊະນິດພັນປາທ້ອງຖິ່ນ. ຊະນິດພັນປາ ໃນລະບົບແຫລ່ງນ້ຳເຂດເນີນສູງ ແມ່ນຍັງບໍ່ທັນໄດ້ມີການສຶກສາຄົ້ນຄວ້າ ແລະມີຄວາມເປັນໄປໄດ້ວ່າ ມັນຈະເພີ່ມເຕີມເຂົ້າໃນ ຄວາມຫລາກຫລາຍລວມ ແລະ ຄຸນຄ່າດ້ານການອະນຸລັກ ຂອງຊັບພະຍາກອນສັດນ້ຳ ຢູ່ໃນເຂດປ່າສະຫງວນ ນາກາຍ ນ້ຳເທີນ ໄດ້ຢ່າງສຳຄັນ.

ເຂດປ່າສະຫງວນແຫ່ງຊາດນາກາຍ ນ້ຳເທີນປະກອບດ້ວຍຫລາຍຖິ່ນທີ່ຢູ່ອາໄສທີ່ສຳຄັນ ຕາມສາຍພູຫລວງ. ປ່າດົງດິບປະສົມແລະປ່າຕົ້ນໝາກກໍ່(Fagaceous) ທີ່ຍັງບໍ່ທັນໄດ້ຖືກບຸກລຸກລົບກວນໃດໆ ໄດ້ເປັນບ່ອນອາໄສທີ່ປອດໄພຂອງພັນພືດ ແລະ ພັນສັດປ່າທີ່ສຳຄັນຕ່າງໆ. ອີກດ້ານໜຶ່ງ ພັນພືດແມ່ນຍັງລໍຖ້າໃຫ້ມີການສຳຫລວດເພື່ອຮູ້ເຖິງລາຍລະອຽດວ່າ ມັນສາມາດຕອບສະໜອງຢ່າງພຽງພໍຕໍ່ກັບຄວາມຈຳເປັນຂອງບັນດາສັດປ່າ ປະເພດລ້ຽງລູກດ້ວຍນົມ ແລະ ນົກຊະນິດພັນຕ່າງໆບໍ່, ຊຶ່ງຢູ່ເຂດນີ້ ແມ່ນຮູ້ແລ້ວວ່າ ໄດ້ມີຄວາມຫລາກຫລາຍ ຂອງພືດຕະກູນໄມ້ແປກ( Gymnosperm genera) ທີ່ຫາຍາກ, ໂດຍສະເພາະຊະນິດພັນໄມ້ໂລ່ງເລ່ງ ແລະ ໄມ້ຮິ້ງ(Fokienia ແລະ Keteleeria). ບໍ່ຕ້ອງສົງໃສເລີຍວ່າ ຍັງມີຫລາຍຊະນິດພັນໃໝ່ໆ ທີ່ລໍຖ້າໃຫ້ຄົ້ນພົບ. ຖິ່ນທີ່ຢູ່ອາໄສ ເຂດປ່າແປກ ແມ່ນບໍ່ມີຄວາມອຸດົມສົມບູນດ້ານພຶກສາສາດ, ແຕ່ມັນກໍມີຄວາມສຳຄັນສູງຕໍ່ການອະນຸລັກ. ໃນນີ້ແມ່ນລວມເຖິງຖິ່ນທີ່ຢູ່ອາໄສ ເຂດປ່າແປກ(Pinus merkusii) ດັ້ງເດີມເຂດໜຶ່ງ ໃນຈານວນສອງສາມເຂດທີ່ຫລົງເຫລືອ ຢູ່ໃນທົ່ວພູມີພາກອາຊີຕາເວັນອອກສ່ຽງໃຕ້ ແລະ ມັນຍັງມີຄວາມສຳຄັນຕໍ່ສັດປ່າ ອີກດ້ວຍ.

ເຂດປ່າສະຫງວນຂະໜາດໃຫຍ່ ປະກອບເປັນເຂດເຊື່ອມຕໍ່ທີ່ເປັນແກນກາງ ຂອງເຂດອະນຸລັກທີ່ສຳຄັນ ທັງຢູ່ໃນ ສປປ ລາວ ແລະ ຫວຽດນາມ ຊຶ່ງທັງໝົດແມ່ນເປັນຕົວແທນໃຫ້ ເຂດອະນຸລັກທີ່ສຳຄັນ ຢູ່ໃນຂົງເຂດ ສປປ ລາວ-ກຳປູເຈັຍ ແລະ ຫວຽດນາມ. ສະເພາະເຫດຜົນນີ້ຢ່າງດຽວ ກໍສາມາດເຮັດໃຫ້ ເຂດປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ ມີຄຸນຄ່າດ້ານການອະນຸລັກທີ່ໂດດເດັ່ນ ແລະ ປະກອບເປັນບ່ອນອີງໃຫ້ແກ່ ການສະເໜີແນະໃຫ້ ລັດຖະບານ ແຫ່ງ ສປປ ລາວ ຂໍໃຫ້ເປັນເຂດມໍລະດົກໂລກ ແລະ ເຊື່ອມໂຍງເຂດດັ່ງກ່າວເຂົ້າກັບ ພື້ນທີ່ອະນຸລັກອື່ນໆ ຢູ່ໃນ ສປປ ລາວ ແລະ ຫວຽດນາມ.

**ຄຸນຄ່າດ້ານແຫລ່ງນ້ຳ**

ນ້ຳເທີນ ມີໂຄງການເຂື່ອນໄຟຟ້າສອງແຫ່ງ ຄື: ໂຄງການເຂື່ອນໄຟຟ້ານຳ້ເທີນ 2 ແລະ ໂຄງການເຂື່ອນໄຟຟ້າ ເທີນຫີນບູນ, ຂາຍໄຟຟ້າໃຫ້ປະເທດໄທ. ທິດທາງການໄຫລຂອງສາຍນ້ຳ ໃນເຂດປ່າສະຫງວນ ໂດຍລວມແລ້ວ ແມ່ນໄຫລລົງທິດຕາເວັນຕົກສ່ຽງໃຕ້ ຕົກໃສ່ແຫລ່ງນ້ຳເທີນ, ເຂດປ່າສະຫງວນທັງໝົດເກືອບແມ່ນ ເຂດແຫລ່ງນ້ຳເທີນ. ຊຶ່ງນ້ຳເທີນນີ້ເປັນແມ່ນ້ຳສາຂາທີ່ສຳຄັນຂອງນ້ຳກະດິງ ແລະ ຕົວມັນເອງຈຶ່ງກາຍເປັນແມ່ນ້ຳສາຂາທີ່ສຳຄັນຂອງແມ່ນ້ຳຂອງ.

**ຄຸນຄ່າ ດ້ານວັດທະນະທຳ**

ປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ ຍັງເປັນສັນຍາລັກ ຂອງຫລາຍວັດທະນະທຳທີ່ສຳຄັນ, ໃນນີ້ ລວມມີ ກຸ່ມຊົນເຜົ່າພື້ນເມືອງທີ່ສ່ຽງຕໍ່ການສູນພັນ. ເຂດນີ້ແມ່ນມີປະຫວັດສາດອັນຍາວນານ ກ່ຽວກັບການຕັ້ງຖິ່ນຖານຂອງມະນຸດຫລາຍຊົນເຜົ່າ. ຊົນເຜົ່າເຫລົ່ານີ້ ສາມາດແບ່ງອອກໄດ້ໂດຍອາໄສຄວາມແຕກຕ່າງທາງດ້ານພາສາ, ເຖິງແມ່ນວ່າອາດຈະຍັງບໍ່ມີຄວາມຊັດເຈນກໍຕາມ, ແຕ່ການຈັດແບ່ງຊົນເຜົ່າ ກໍເປັນປະໂຫຍດໃຫ້ແກ່ການວາງແຜນ ແລະ ການຄຸ້ມຄອງ. ຄຳວ່າ ຫວຽດຕິກ (29% ຂອງປະຊາຊົນໃນເຂດປ່າສະຫງວນ) ໝາຍເຖິງກຸ່ມຂອງປະຊາຊົນທີ່ເວົ້າພາສາຫຽດຕິກ ທີ່ເປັນສາຍໜຶ່ງຂອງໝວດພາສາ ມອນ-ຂະແມ (Austroasiatic). ໃນປະຈຸບັນ ເຂດປ່າສະຫງວນນາກາຍ ນ້ຳເທີນ ໄດ້ພົບວ່າມີ 17 ພາສາ. ບລູ (55% ຂອງປະຊາຊົນໃນເຂດປ່າສະຫງວນ) ເປັນພຽງພາສາດຽວ ທີ່ນຳໃຊ້ພາສາ ກາຕຸກຕາເວັນຕົກ ຊຶ່ງກໍເປັນສາຍຍ່ອຍໜຶ່ງຂອງພາສາມອນ-ຂະແມ. ໄຕ/ແຊັກ (16% ຂອງຈຳນວນປະຊາຊົນໃນເຂດປ່າສະຫງວນ) ແມ່ນສາມາດໃຊ້ໄດ້ກັບທຸກກຸ່ມທີ່ປາກພາສາ ໄຕ-ກະດາຍ. ໃນເຂດປ່າສະຫງວນນາກາຍ ນ້ຳເທີນ ແມ່ນມີຢ່າງໜ້ອຍ 10 ພາສາ ທີ່ໃຊ້ກັນຢູ່.

ລະຫວ່າງກຸ່ມຫວຽດຕິກດັ້ງເດີມ ແມ່ນມີວັດທະນະທຳທີ່ແຕກຕ່າງອອກໄປຢ່າງຈະແຈ້ງ. ຮູບແບບການຜະລິດ ແລະ ການນຳໃຊ້ພື້ນທີ່ຂອງພວກເຂົາ ແມ່ນແຕກຕ່າງກັນອອກໄປ ຈາກການນຳໃຊ້ເຂດປ່າເຫລົ່ານ້ອຍໆໝູນວຽນໄປ ແລະ ລວມທັງການເຮັດໄຮ່ ແລະ ນາທີ່ຫົດດ້ວຍ ຝາຍດິນ. ໃນດ້ານຄວາມສ່ຽງ ແລະ ຄວາມບອບບາງຕໍ່ການສູນພັນ ຂອງຊົນເຜົ່າສ່ວນນ້ອຍ, ກຸ່ມທີ່ມີຄວາມສ່ຽງຫລາຍທີ່ສຸດແມ່ນ ກຸ່ມຫວຽດຕິກທີ່ດຳລົງຊີວິດຢູ່ເຂດຍອດນ້ຳ. ໃນຈຳນວນນີ້ ກຸ່ມທີ່ມີຄວາມບອບບາງຕໍ່ການສູນພັນ ກວ່າໝູ່ໝົດແມ່ນກຸ່ມອາແຕນ, ເຕມາລູ ແລະ ເມັ່ງບລູ, ຊຶ່ງເປັນກຸ່ມທີ 1 ຂອງຫວຽດຕິກ ແລະມີລັກສະນະເປັນເໝືອນ "ກຸ່ມຄົນເລ່ລ້ອນ" ປະຊາຊົນກຸ່ມນີ້ ຮູ້ ແລະ ເຂົ້າໃຈປ່າໄມ້ໄດ້ດີ. ວັດທະນະທຳ ແລະ ຮູບແບບການດຳລົງຊີວິດຂອງພວກເຂົາແມ່ນອາໄສ ຢູ່ກັບທຳມະຊາດຢ່າງໃກ້ຊິດ.

ຄວາມຈິງແລ້ວ ຄຳວ່າ "ຕົກຢູ່ໃນຄວາມສ່ຽງ" ໃນກໍລະນີຂອງພວກເຂົາອາດຈະເປັນການອະນຸລັກນິຍົມຫລາຍເກີນໄປ, ຍ້ອນວ່າ ຕາມສະພາບຄວາມຮ້າຍແຮງແລ້ວ ຖືກຕ້ອງແທ້ຄວນຈະກຳນົດເປັນ "ຕົກຢູ່ໃນສະພາບທີ່ໃກ້ຈະສູນພັນ". ໃນປີ 2003, ກຸ່ມສຸດທ້າຍທີ່ຍັງຫລົງເຫລືອຢູ່ (ອາແຕນ 16 ຄົນ, ເຕມາລູ 30 ກວ່າຄົນ ແລະ ເມັ່ງບລູ 9 ຄົນ) ຖືກພົບເຫັນວ່າໄດ້ດຳລົງຊີວິດຢູ່ໃນ ຫລື ຢູ່ໃກ້ກັບບັນດາບ້ານ ທີ່ພວກເຂົາໄດ້ຖືກກຳນົດໃຫ້ຢູ່ ຕາມນະໂຍບາຍການລວມບ້ານ ຂອງລັດຖະບານ ໃນຊຸມປີ 1970.

**ບ່ອນຕິດຕໍ່ພົວພັນ**


ທ່ານ ທອງແອດ ໄພວັນ

ຫົວໜ້າ, ປ່າສະຫງວນແຫ່ງຊາດ ນາກາຍ ນ້ຳເທີນ

(ອົງການຄຸ້ມຄອງ ແລະ ປົກປັກຮັກສາແຫລ່ງນ້ຳ)

ເມືອງ ນາກາຍ ແລະ ເມືອງ ທ່າແຂກ, ແຂວງ ຄຳມ່ວນ ໂທ: (051) 212-099


## ບົດລາຍງານ ແລະ ເອກະສານອ້າງອີງຕ່າງໆ


Boonratana, R. (1999). Wildlife Monitoring and Participatory Conservation Techniques at Nakai-Nam Theun NBCA. WCS/IUCN. Vientiane.

CARE. (1996). Socio-Economic and Cultural Survey of the Nam Theun 2 Project Area. CARE. Vientiane.

Chamberlin, J. R. (1997a). *Cultural Diversity and Socio-economic Development in the Context of Conservation*. Unpublished draft submitted to IUCN "Environmental and Social Action Plan for the Nakai-Nam Theun Catchment and Corridor Areas". Vientiane.

Chamberlin, J. R. (1997b). *Nature and Culture in the Nakai-Nam Theun Conservation Area*.
Coudrat, C. (2013). Species distribution, abundance and conservation in Nakai-Nam Theun National Protected Area, Central eastern Laos: implications for future local wildlife conservation project. PhD thesis
Coudrat, C. and Nekaris, K. A.-I. (2013). Modelling Niche Differentiation of Co-Existing, Elusive and Morphologically Similar Species: A Case Study of Four Macaque Species in Nakai-Nam Theun National Protected Area, Laos. *Animals*, 3(1), pp. 45–62. doi: 10.3390/ani3010045.
Coudrat, C.N.Z., Nanthavong, C., Sayavong, S., Johnson, A., Johnston, J. and Robichaud, W.G. (2014a). Conservation importance of Nakai-Nam Theun National Protected Area, Laos, for small carnivores based on camera trap data', *Raffles Bulletin of Zoology*, 62, pp. 31–49.
Coudrat, C. N. Z. *et al.* (2014b). Non-Panthera cats in Nakai-Nam Theun National Protected Area, Lao PDR. *Cat News - Special Issue*, 8, pp. 45–52.
Coudrat, C. N. Z., Nanthavong, C. and Nekaris, K. A. I. (2013). Conservation of the red-shanked douc Pygathrix nemaeus in Lao People's Democratic Republic: density estimates based on distance sampling and habitat suitability modelling. *Oryx*, 48(04), pp. 540–547.
Coudrat, C. N. Z., C. Nanthavong, D. Ngoprasert, P. Suwanwaree & T. Savini. (2015). Singing Patterns of White-Cheeked Gibbons (Nomascus sp.) in the Annamite Mountains of Laos. *International Journal of Primatology*, 36, pp. 691–706.
Coudrat, C.N.Z. (2016). Preliminary camera-trap otter survey in Nakai-Nam Theun National Protected Area Nov-Dec 2015. Project Anoulak, Lao PDR.
Duckworth, J.W., Salter, R.E. and Khounboline, K. (1999). *Wildlife in Lao PDR. 1999 Status Report.* IUCN, Wildlife Conservation Society, and Centre for Protected Areas and Watershed Management, Department of Forestry, Vientiane.
Duckworth, J. (1998) 'A survey of large mammals in the central Annamite mountains of Laos', *Zejtschrift Füur Saugetierkunde*, 63, pp. 239–250.
Dung, V. V., Giao, P. M., Chinh, N. N., Tuoc, D. & Mackinnon, J. (1993). A new species of living bovid from Vietnam. *Nature* 363, 443-445.
Groves, C. P., Schaller, G. B., Amato, G. and Khounboline, K. (1997). Rediscovery of the wild pig *Sus bucculentus*. *Nature* 380: 135.
Hansel, T. and Vannalath, S. (1999). Nakai-Nam Theun NBCA Staff Training and Capacity Building on Extension Techniques for Participatory Conservation. WCS/IUCN. Vientiane.
IUCN (1998a). Social Action Plan for the Nakai-Nam Theun Conservation Area. IUCN. Vientiane.
IUCN (1998b). Environmental and Social Management Plan for Nakai-Nam Theun Catchment and Corridor Areas (Revision 1 - May 1998). IUCN. Vientiane.
IUCN (1999). Nakai-Nam Theun Conservation Area Programme - Phase 2: Community Development and Biodiversity Conservation Pilot Field Activities Final Report. IUCN. Vientiane.
Ingles, A., Saypaseuth, T., Foppes, J., Baker, J., Khetphanh, S., Bounsou, S. and Sengkeo, K. (1999). A rapid survey of the use and Government regulation of non-timber forest products from the Nakai-Nam Theun National Biodiversity Conservation Area, Central Lao PDR. IUCN. Vientiane.
Jarvie, J. K. (1997). *Technical Report of the Botanist - Plant Ecologist* in "Environmental and Social Action Plan for the Nakai-Nam Theun Catchment and Corridor Areas (IUCN/WCS)". WCS. Vientiane.
Kottelat, M. (1996) Potential Impact of the Nam Theun 2 Hydropower Project on the Fish and Aquatic Fauna of the Nam Theun and Xe Bang Fai Basins, Lao PDR. Cornol, Switzerland. 2 Volumes.
Roberts, T. R. (1996) Fluvicide: an independent environmental assessment of the Nam Theun 2 hydropower project in Lao, with particular reference to aquatic biology and fishes. Bangkok.
Robichaud, W. (1997). Saola Conservation Action Plan. IUCN/WCS, Vientiane.
Robichaud, W. (1998). Nakai-Nam Theun Saola Conservation: Interim report after the first phase of fieldwork, 22 May to 15 June 1998. Report to IUCN. WCS, Vientiane.
Robichaud, W. (1999). Saola Conservation Action Plan – 1999 Revision. WCS/IUCN. Vientiane.
Robichaud, W. and Stuart, B. (1999). Summary of Saola, Herpetological and Wildlife Trade Studies in Nakai-Nam Theun NBCA and the Proposed Northern Extension. WCS/IUCN. Vientiane.

Robichaud, W. and Stuart, B. (1999) Revised Report of Saola , Herpetological , and Wildlife Trade Studies in Nakai-Nam Theun National Biodiversity Conservation Area and the Proposed Nam Theun Extension, Khammouan and Bolikhamxay Provinces, Lao PDR IUCN-The World Conservation Union Revised. Vientiane, Lao PDR.

Salter, R. E. (1993) *Wildlife in Lao PDR. A Status Report*. Vientiane: IUCN.

Schaller, G. & Rabinowitz, A. (1994). *The saola or spindlehorn bovid* Pseudoryx nghetinhensis *in Lao*. Oryx 29: 107-114.

Schaller, G. & Vrba, E.S. (1996). *Description of the Giant Muntjac* Megamuntiacus vuquangensis *in Lao*. Journal of Mammalogy 77(3): 675-683.

Stuart, B. (1998a). *A Survey of Amphibians and Reptiles in Hin Nam No NBCA, East-central Laos*. Centre for Protected Areas and Watershed Management/Wildlife Conservation Society Cooperative Program, Vientiane.

Stuart, B. (1998b). *A Survey of Amphibians and Reptiles in Khammouane Limestone National Biodiversity Conservation Area*. Centre for Protected Areas and Watershed Management/Wildlife Conservation Society Cooperative Program, Vientiane.

Stuart, B. (1998c). *A Survey of Amphibians and Reptiles in Phou Luey National Biodiversity Conservation Area, Bolikhamxay Province, Lao PDR*. Centre for Protected Areas and Watershed Management/Wildlife Conservation Society Cooperative Program, Vientiane.

Srisomvang, V. (1998). Recommendations on Agro-Forestry and Community Development in Ban Makfueang Village, Nakai-Nam Theun NBCA (December 1998). ECOLAO/IUCN. Vientiane. [Lao]

Timmins, R. J. and Evans, T. D. (1996). A Wildlife and Habitat Survey of Nakai-Nam Theun National Biodiversity Conservation Area, Khammouan and Bolikhamsai Provinces, Lao PDR. WCS. Vientiane.

Tizard, R. J. (1996) A preliminary wildlife and habitat survey of the proposed northern extension to the Nakai-Nam Theun National Biodiversity Conservation Area and the adjacent Nam Gnouang area, Bolikhamsai Province, Lao PDR. Vientiane: WCS.

Thamawongsa, P. (1999). Land-Use Planning in Ban Pung. NNT NBCA/IUCN. [Lao]

Thewlis, R. C. M., Duckworth, J. W., Evans, T. D. and Timmins, R. J. (1998). The status and conservation of threatened birds in Laos. Bird Conservation International.

Tobias, J. (1997). *Report of the Wildlife Survey* in "Environmental and Social Action Plan for the Nakai-Nam Theun Catchment and Corridor Areas (IUCN/WCS)". WCS. Vientiane.

Tuoc, D., Dung, V. V., Dawson, S., Arctander, P. and Mackinnon, J. (1994) Introduction of a new large mammal species in Viet Nam. *Science and Technology News*. Forest Inventory and Planning Institute, Ministry of Forestry, Hanoi.

Wildlife Conservation Society (1995). *A preliminary wildlife and habitat assessment of the Nam Theun 2 Hydropower Project area*. WCS/CPAWM. Vientiane.

Wildlife Conservation Society (1996a). *A Preliminary Wildlife and Habitat Survey of the Proposed Northern Extension to the Nakai-Nam Theun National Biodiversity Conservation Area and the Adjacent Nam Gnouang Area, Bolikhamsai Province, Lao PDR*. WCS. Vientiane.

Wildlife Conservation Society (1996b). *Survey of nocturnal mammals in and near the Nakai-Nam Theun National Biodiversity Conservation Area, Central Lao PDR, with notes on other wildlife observed and recommendations for management of the area*. WCS. Vientiane.

Wildlife Conservation Society (1996c). *Additional surveys and recommendations on the birds and mammals for the Nam Theun 2 Hydropower Project with emphasis on the proposed Corridor and the reservoir Islands Area*. WCS. Vientiane.